ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ 105 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 19 ສິງຫາ 2022

# ລັດຖະດຳລັດ
# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
**ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍການສົ່ງເສີມຈຸລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ (ສະບັບປັບປຸງ)**

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິຂອງກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 48/ສພຊ, ລົງວັນທີ 07 ກໍລະກົດ 2022 ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍການສົ່ງເສີມຈຸລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ (ສະບັບປັບປຸງ);
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 09/ຄປຈ, ລົງວັນທີ 05 ສິງຫາ 2022.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

**ມາດຕາ 1** ປະກາດໃຊ້ກົດໝາຍວ່າດ້ວຍການສົ່ງເສີມຈຸລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ (ສະບັບປັບປຸງ).

**ມາດຕາ 2** ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ປະທານປະເທດ

**ທອງລຸນ ສີສຸລິດ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 48 / ສພຊ

ນະຄອນຫຼວງວຽງຈັນ, ວັນທີ 07/07/22

# ມະຕິ
## ຂອງກອງປະຊຸມສະພາແຫ່ງຊາດ
## ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍການສົ່ງເສີມຈຸລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ (ສະບັບປັບປຸງ)

- ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ມາດຕາ 53 ຂໍ້ 1 ແລະ ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ (ສະບັບປັບປຸງ ປີ 2020) ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍການສົ່ງເສີມຈຸລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ (ສະບັບປັບປຸງ) ໃນວາລະຂອງກອງປະຊຸມ ຄັ້ງວັນທີ 29 ມິຖຸນາ 2022 ແລະ ຖືກພິຈາລະນາຮັບຮອງເອົາໃນວາລະຕອນເຊົ້າຂອງ ວັນທີ 7 ກໍລະກົດ 2022.

### ກອງປະຊຸມສະພາແຫ່ງຊາດ ຕົກລົງ:

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍການສົ່ງເສີມຈຸລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ (ສະບັບປັບປຸງ) ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສະມາຊິກສະພາແຫ່ງຊາດ ທີ່ເຂົ້າຮ່ວມກອງປະຊຸມ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປອ ໄຊສົມພອນ ພົມວິຫານ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ສະພາແຫ່ງຊາດ ເລກທີ 16 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 7 ກໍລະກົດ 2022

# ກົດໝາຍວ່າດ້ວຍ
# ການສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ
# (ສະບັບປັບປຸງ)

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 (ປັບປຸງ) ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຈັດຕັ້ງ, ການເຄື່ອນໄຫວ, ການຄຸ້ມຄອງ ແລະ ຕິດຕາມ ກວດກາ ວຽກງານສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດ ຂະໜາດນ້ອຍ ແລະ ກາງ ເພື່ອພັດທະນາ ແລະ ສ້າງຄວາມສາມາດໃນການແຂ່ງຂັນຂອງຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ, ຊຸກຍູ້ການຜະລິດສິນຄ້າ, ການຄ້າ ແລະ ການບໍລິການ ແນໃສ່ສ້າງວຽກເຮັດງານທຳ, ສ້າງລາຍຮັບ, ປົກປ້ອງພູມປັນຍາທ້ອງຖິ່ນ, ຍົກສູງລະດັບຊີວິດການເປັນຢູ່ຂອງປະຊາຊົນ ແລະ ໃຫ້ມີການພັດທະນາຢ່າງທົ່ວເຖິງ ແລະ ຍືນຍົງ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ ໃຫ້ເຕີບໃຫຍ່ເຂັ້ມແຂງ.

**ມາດຕາ 2 (ປັບປຸງ) ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ**

ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ແມ່ນ ຫົວໜ່ວຍທຸລະກິດ ທີ່ໄດ້ຮັບການສ້າງຕັ້ງ ແລະ ເຄື່ອນໄຫວຢ່າງຖືກຕ້ອງ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ໂດຍກຳນົດຂະໜາດ ຕາມຈຳນວນແຮງງານສະເລ່ຍໃນປີ, ມູນຄ່າຊັບສິນ ທັງໝົດ ແລະ ລວມຍອດລາຍຮັບທຸລະກິດ ປະຈຳປີ ຂອງແຕ່ລະຂະແໜງວິສາຫະກິດ ຊຶ່ງລັດຖະບານ ເປັນຜູ້ກຳນົດ ໃນແຕ່ລະໄລຍະ.

ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ຂຽນຫຍໍ້ວ່າ “ຈນກ”.

**ມາດຕາ 3 ການສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ**

ການສົ່ງເສີມ ຈນກ ແມ່ນ ການວາງນະໂຍບາຍ ແລະ ການກຳນົດມາດຕະການ ເພື່ອສ້າງສະພາບແວດລ້ອມ ແລະ ເງື່ອນໄຂດ້ານຕ່າງໆ ທີ່ອຳນວຍຄວາມສະດວກ ໃຫ້ແກ່ຜູ້ປະກອບກິດຈະການ ໃນການສ້າງຕັ້ງ, ດຳເນີນ ແລະ ພັດທະນາ ຈນກ.

ມາດຕາ 4 (ປັບປຸງ) ການອະທິບາຍຄຳສັບ

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. ຜູ້ປະກອບກິດຈະການ ໝາຍເຖິງ ເຈົ້າຂອງ ຫຼື ຜູ້ບໍລິຫານວິສາຫະກິດທີ່ເຮັດທຸລະກິດໃດໜຶ່ງ ເພື່ອສ້າງລາຍໄດ້ ທີ່ເກີດຈາກຫົວຄິດປະດິດສ້າງ, ພູມປັນຍາ ແລະ ມີຄວາມຮັບຜິດຊອບຕໍ່ຄວາມສ່ຽງທັງ ກຳໄລ-ຂາດທຶນ ດ້ວຍຕົນເອງ;

2. ສູນກໍ່ສ້າງຜູ້ປະກອບກິດຈະການ (Business Incubation Centre) ໝາຍເຖິງ ການຈັດຕັ້ງໜຶ່ງທີ່ໃຫ້ການຊ່ວຍເຫຼືອທຸລະກິດແບບສະຕາດອັບ ແລະ ຜູ້ປະກອບກິດຈະການ ໃນການພັດທະນາທຸລະກິດ ດ້ວຍການບໍລິການວິຊາການພັດທະນາທຸລະກິດແບບຄົບວົງຈອນ ເລີ່ມຈາກການຝຶກອົບຮົມ ດ້ານບໍລິຫານທຸລະກິດ, ການໃຫ້ຄຳປຶກສາ, ການສະໜອງສະຖານທີ່ປະກອບກິດຈະການ ແລະ ເຂົ້າຫາແຫຼ່ງທຶນ;

3. ທຸລະກິດແຟຣນຊາຍ (Franchise) ໝາຍເຖິງ ທຸລະກິດທີ່ໄດ້ຮັບສິດ ແລະ ດຳເນີນຕາມເງື່ອນໄຂຂອງເຈົ້າຂອງຍີ່ຫໍ້ ຫຼື ຊື່ການຄ້າໃດໜຶ່ງ ທີ່ໄດ້ຈົດທະບຽນຊັບສິນທາງປັນຍາຖືກຕ້ອງຕາມກົດໝາຍ ຢູ່ ສປປ ລາວ ຫຼື ຕ່າງປະເທດ ໃນ ການຜະລິດ, ການຈຳໜ່າຍສິນຄ້າ ແລະ ການບໍລິການ;

4. ຕ່ອງໂສ້ມູນຄ່າເພີ່ມ ໝາຍເຖິງ ບັນດາຂອດການເຄື່ອນໄຫວທຸລະກິດທີ່ພົວພັນກັນ ຊຶ່ງເລີ່ມຈາກຂອດວັດຖຸດິບ ເພື່ອສະໜອງໃຫ້ແກ່ ການຜະລິດ, ການແປຮູບ, ການປຸງແຕ່ງ, ການຄ້າ, ການຕະຫຼາດ ຈົນເຖິງການຊົມໃຊ້ສຳລັບສິນຄ້າໃດໜຶ່ງ;

5. ຜະລິດຕະພາບ ໝາຍເຖິງ ປະສິດທິພາບ ແລະ ປະສິດທິຜົນ ຂອງການເຄື່ອນໄຫວວຽກງານ, ການຜະລິດທຸລະກິດ ໂດຍເປັນການປຽບທຽບ ລະຫວ່າງຜົນໄດ້ຮັບ ແລະ ປັດໄຈນຳເຂົ້າ ເຊັ່ນ ແຮງງານ, ທຶນ, ວັດຖຸດິບ ແລະ ເວລາ;

6. ການບໍລິການວິຊາການເພື່ອພັດທະນາທຸລະກິດ (Business Development Services–BDS) ໝາຍເຖິງ ການສະໜອງບໍລິການດ້ານວິຊາການຂອງການຈັດຕັ້ງ ແລະ ບຸກຄົນ ເພື່ອປັບປຸງ ຈນກ ດ້ວຍຮູບແບບຕ່າງໆ ເຊັ່ນ ການຝຶກອົບຮົມ, ການຖ່າຍທອດເຕັກໂນໂລຊີ, ການວາງແຜນທຸລະກິດ, ການຕະຫຼາດ, ການໃຫ້ການປຶກສາ, ການແນະນຳ, ການວິເຄາະ, ວິໄຈ, ການສະໜອງ ຂໍ້ມູນ ຂ່າວສານ ແລະ ອື່ນໆ;

7. ການຮ່ວມກຸ່ມທຸລະກິດ (Business Cluster) ໝາຍເຖິງ ການຮ່ວມມືຂອງບັນດາຫົວໜ່ວຍທຸລະກິດໃນຂະແໜງດຽວກັນ ຫຼື ກ່ຽວພັນກັນ ແລະ ມີທີ່ຕັ້ງໃນບໍລິເວນດຽວກັນ ໂດຍໝູນໃຊ້ທ່າແຮງຂອງແຕ່ລະຫົວໜ່ວຍທຸລະກິດເຂົ້າໃນການຮ່ວມມືກັນ ເພື່ອເຮັດໃຫ້ຫຼຸດຕົ້ນທຶນ ແລະ ສ້າງຄວາມສາມາດໃນການແຂ່ງຂັນ;

8. ທຸລະກິດແບບສະຕາດອັບ (Startup) ໝາຍເຖິງ ທຸລະກິດ ຫຼື ໂຄງການທຸລະກິດຮູບແບບໃໝ່ ດ້ວຍການນຳໃຊ້ເຕັກໂນໂລຊີ ແລະ ນະວັດຕະກຳດ້ານຕ່າງໆ ຊຶ່ງມີຮູບແບບທຸລະກິດທີ່ຮອງຮັບການຂະຫຍາຍຕົວໃນຈັງຫວະທີ່ໄວໄດ້;

9. ນະວັດຕະກຳ ໝາຍເຖິງ ການປະດິດສ້າງ, ການພັດທະນາ ແລະ ການນຳສະເໜີຜະລິດຕະພັນ, ຂະບວນການ ຫຼື ການບໍລິການແນວໃໝ່ ທີ່ມີປະສິດທິພາບ, ປະສິດທິຜົນ ແລະ ຄວາມສາມາດໃນການແຂ່ງຂັນ;

10. ສະຖານທີ່ເຮັດວຽກຮ່ວມ (Coworking Space) ໝາຍເຖິງ ສະຖານທີ່ເຮັດວຽກ ທີ່ສາມາດໃຊ້ຮ່ວມກັນ ຊຶ່ງເປີດໃຫ້ບໍລິການທົ່ວໄປ ໂດຍມີອຸປະກອນ ແລະ ສິ່ງອຳນວຍຄວາມສະດວກຕ່າງໆ;

11. ລະບົບນິເວດທາງທຸລະກິດ (Business Ecosystem) ໝາຍເຖິງ ບັນດາເຄືອຂ່າຍໜ່ວຍງານ ແລະ ອົງການທີ່ກ່ຽວຂ້ອງກັບທຸລະກິດ ທີ່ແຂ່ງຂັນ ແລະ ຮ່ວມມືກັນ ໃນການຜະລິດ ແລະ ສົ່ງມອບສິນຄ້າ ແລະ ບໍລິການ;

12. ຜູ້ລົງທຶນອິດສະລະ (Angel Fund) ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ສະໜອງທຶນ ໂດຍກົງໃຫ້ແກ່ທຸລະກິດແບບສະຕາດອັບໃນໄລຍະເລີ່ມຕົ້ນ;

13. ກອງທຶນຮ່ວມລົງທຶນ (Venture Capital) ໝາຍເຖິງ ກອງທຶນທີ່ໄດ້ຮັບການສ້າງຕັ້ງ ແລະ ລະດົມທຶນຈາກບຸກຄົນ ຫຼື ນິຕິບຸກຄົນ ເພື່ອລົງທຶນໃສ່ທຸລະກິດແບບສະຕາດອັບ ຫຼື ທຸລະກິດຂະໜາດນ້ອຍ ທີ່ມີທ່າແຮງພັດທະນາໃນໄລຍະຍາວ;

14. ການລະດົມທຶນຈາກບຸກຄົນທົ່ວໄປ (Crowd Funding) ໝາຍເຖິງ ການລະດົມທຶນຈາກບຸກຄົນທົ່ວໄປ ຢ່າງກວ້າງຂວາງ ເພື່ອເຮັດທຸລະກິດ;

15. ພລັດຟອມ (Platform) ໝາຍເຖິງ ແບບຈໍາລອງທຸລະກິດ ທີ່ຊ່ວຍໃນການແລກປ່ຽນສິນຄ້າ ແລະ ບໍລິການ ລະຫວ່າງ ຜູ້ຜະລິດ ແລະ ຜູ້ບໍລິໂພກ.

**ມາດຕາ 5 (ປັບປຸງ) ນະໂຍບາຍຂອງລັດ ກ່ຽວກັບວຽກງານສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ**

ລັດ ຊຸກຍູ້ວຽກງານສົ່ງເສີມ ຈນກ ດ້ວຍການວາງນະໂຍບາຍ, ສ້າງກົນໄກ ແລະ ເງື່ອນໄຂອໍານວຍຄວາມສະດວກອື່ນ ໃຫ້ແກ່ການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ເພື່ອພັດທະນາ ຈນກ ໃຫ້ຫຼາກຫຼາຍ, ເຂັ້ມແຂງ, ທັນສະໄໝ, ທົ່ວເຖິງ ຕາມທິດສີຂຽວ ແລະ ຍືນຍົງ.

ລັດ ເອົາໃຈໃສ່ກໍ່ສ້າງໂຄງລ່າງພື້ນຖານ, ພັດທະນາບຸກຄະລາກອນ, ສະໜອງ ງົບປະມານ, ພາຫະນະ ແລະ ວັດຖຸປະກອນທີ່ຈໍາເປັນ ໃຫ້ແກ່ອົງການຈັດຕັ້ງທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານສົ່ງເສີມ ຈນກ ຢ່າງມີປະສິດທິພາບ ແລະ ປະສິດທິຜົນ.

ລັດ ຊຸກຍູ້ ສົ່ງເສີມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາກລັດ ແລະ ພາກທຸລະກິດ ປະກອບສ່ວນໃນການຈັດຕັ້ງປະຕິບັດວຽກງານສົ່ງເສີມ ຈນກ ເພື່ອໃຫ້ທຸກພາກສ່ວນມີສ່ວນຮ່ວມໃນການຈັດຕັ້ງປະຕິບັດວຽກງານດັ່ງກ່າວ.

**ມາດຕາ 6 ຫຼັກການກ່ຽວກັບວຽກງານສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ**

ວຽກງານສົ່ງເສີມ ຈນກ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບ ນະໂຍບາຍ, ກົດໝາຍ, ຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ເຂດແຄວ້ນ, ຂະແໜງການ ແລະ ສອດຄ່ອງກັບເງື່ອນໄຂຂອງຂະແໜງ ຈນກ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 9 ຂອງກົດໝາຍສະບັບນີ້;

2. ຮັບປະກັນໃຫ້ ຈນກ ໄດ້ຮັບການສ້າງຕັ້ງ, ດໍາເນີນ ແລະ ພັດທະນາ ດ້ວຍຄວາມສະດວກ, ວ່ອງໄວ, ໂປ່ງໃສ, ຍຸຕິທໍາ ແລະ ກວດສອບໄດ້;

3. ຮັບປະກັນການສ້າງວຽກເຮັດງານທໍາ, ຍົກລະດັບສີມືແຮງງານ ແລະ ຍົກສູງຄຸນນະພາບຊີວິດຂອງປະຊາຊົນ;

4. ຮັບຮູ້, ຮັບປະກັນ ການປົກປ້ອງກໍາມະສິດ ແລະ ສິດຜົນປະໂຫຍດ ທີ່ຖືກຕ້ອງຕາມກົດໝາຍຂອງ ຈນກ;

5. ປົກປັກຮັກສາ ແລະ ຟື້ນຟູຊັບພະຍາກອນທໍາມະຊາດ, ສິ່ງແວດລ້ອມ ແລະ ຮັບປະກັນຄວາມປອດໄພຂອງສັງຄົມ.

**ມາດຕາ 7 ຂອບເຂດການນໍາໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນໍາໃຊ້ສໍາລັບທຸກຂະແໜງ ຈນກ ທີ່ສ້າງຕັ້ງຂຶ້ນ ແລະ ດໍາເນີນກິດຈະການ ຢ່າງຖືກຕ້ອງຕາມກົດໝາຍຂອງ ສປປ ລາວ.

ມາດຕາ 8 ການຮ່ວມມືສາກົນ

ລັດ ສົ່ງເສີມການພົວພັນຮ່ວມມືກັບ ຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານສົ່ງເສີມ ຈນກ ດ້ວຍການ ແລກປ່ຽນບົດຮຽນ ແລະ ຂໍ້ມູນ ຂ່າວສານ, ການຍົກລະດັບຄວາມຮູ້ ແລະ ຄວາມສາມາດ ຂອງບຸກຄະລາກອນ, ການຖ່າຍທອດເຕັກໂນໂລຊີ, ການຊ່ວຍເຫຼືອ ແລະ ອື່ນໆ ບົນພື້ນຖານຄວາມເປັນເອກະລາດ, ສະເໝີພາບ ແລະ ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ ແລະ ປະຕິບັດຕາມສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ.

## ພາກທີ II
## ຂະແໜງຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ

**ມາດຕາ 9 ຂະແໜງຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ**

ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ແບ່ງອອກເປັນ ສາມຂະແໜງ ດັ່ງນີ້:

1. ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ທີ່ດໍາເນີນການຜະລິດສິນຄ້າ;
2. ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ທີ່ດໍາເນີນການຄ້າ;
3. ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ທີ່ດໍາເນີນການບໍລິການ.

**ມາດຕາ 10 ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ທີ່ດໍາເນີນການຜະລິດສິນຄ້າ**

ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ທີ່ດໍາເນີນການຜະລິດສິນຄ້າ ແມ່ນ ຂະແໜງວິສາຫະກິດ ທີ່ເຄື່ອນໄຫວທຸລະກິດ ໃນຂົງເຂດອຸດສາຫະກໍາປຸງແຕ່ງ, ຫັດຖະກໍາ ແລະ ການຜະລິດກະສິກໍາ ເພື່ອເປັນສິນຄ້າ.

**ມາດຕາ 11 ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ທີ່ດໍາເນີນການຄ້າ**

ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ທີ່ດໍາເນີນການຄ້າ ແມ່ນ ຂະແໜງວິສາຫະກິດທີ່ເຄື່ອນໄຫວທຸລະກິດ ໃນຂົງເຂດການຄ້າ ຂາຍຍົກ, ຂາຍຍ່ອຍ.

**ມາດຕາ 12 ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ທີ່ດໍາເນີນການບໍລິການ**

ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ທີ່ດໍາເນີນການບໍລິການ ແມ່ນ ຂະແໜງວິສາຫະກິດທີ່ເຄື່ອນໄຫວທຸລະກິດ ໃນຂົງເຂດການບໍລິການ ດ້ານການທ່ອງທ່ຽວ, ຄົມມະນາຄົມ-ຂົນສົ່ງ, ການເງິນ, ການສຶກສາ, ສາທາລະນະສຸກ ແລະ ການບໍລິການອື່ນ.

## ພາກທີ III
## ນະໂຍບາຍສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ

**ມາດຕາ 13 (ປັບປຸງ) ນະໂຍບາຍສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ**

ການສົ່ງເສີມ ຈນກ ປະກອບດ້ວຍ ນະໂຍບາຍ ດັ່ງນີ້:

1. ການສ້າງສະພາບແວດລ້ອມ ທີ່ເອື້ອອໍານວຍໃຫ້ແກ່ການດໍາເນີນທຸລະກິດ;
2. ການເຂົ້າເຖິງແຫຼ່ງທຶນ;

3. ການໃຫ້ນະໂຍບາຍດ້ານ ພາສີ, ອາກອນ ແລະ ບັນຊີ;

4. ການສ້າງ ແລະ ພັດທະນາຜູ້ປະກອບກິດຈະການ;

5. ການບໍລິການວິຊາການ ເພື່ອພັດທະນາທຸລະກິດ;

6. ການຮ່ວມມື ລະຫວ່າງ ຈນກ ກັບວິສາຫະກິດຂະໜາດໃຫຍ່;

7. ການເພີ່ມຜະລິດຕະພາບ ແລະ ຄຸນນະພາບ;

8. ການເຂົ້າເຖິງ ແລະ ຂະຫຍາຍຕະຫຼາດ;

9. ການຮ່ວມກຸ່ມທຸລະກິດ;

10. ການພັດທະນາສະຖານທີ່ປະກອບກິດຈະການ;

11. ການນຳໃຊ້ເຕັກໂນໂລຊີທີ່ກ້າວໜ້າ ແລະ ເປັນມິດຕໍ່ສິ່ງແວດລ້ອມ;

12. ການນຳໃຊ້ ແລະ ການປົກປ້ອງສິດທາງດ້ານຊັບສິນທາງປັນຍາ;

13. ການສະໜອງ ແລະ ເຂົ້າເຖິງ ຂໍ້ມູນ ຂ່າວສານ;

14. ການສົ່ງເສີມປັດໄຈດ້ານການຜະລິດ;

15. ການສົ່ງເສີມການປະດິດ ແລະ ນຳໃຊ້ນະວັດຕະກຳ;

16. ການສົ່ງເສີມທຸລະກິດແບບສະຕາດອັບ;

17. ການເຂົ້າເຖິງການຈັດຊື້-ຈັດຈ້າງ;

18. ນະໂຍບາຍອື່ນ ທີ່ລັດຖະບານກຳນົດໃນແຕ່ລະໄລຍະ.

**ມາດຕາ 14 (ປັບປຸງ) ການສ້າງສະພາບແວດລ້ອມ ທີ່ເອື້ອອຳນວຍໃຫ້ແກ່ການດຳເນີນທຸລະກິດ**

ລັດ ສ້າງສະພາບແວດລ້ອມ ທີ່ເອື້ອອຳນວຍໃຫ້ແກ່ການດຳເນີນທຸລະກິດ ຂອງ ຈນກ ດັ່ງນີ້:

1. ສ້າງ ແລະ ປັບປຸງນິຕິກຳ ໃຫ້ລະອຽດ, ຄົບຖ້ວນ, ສົມບູນ ແລະ ຮັດກຸມ ພ້ອມທັງກຳນົດວິທີການຄຸ້ມຄອງ ແລະ ບໍລິການຂອງລັດ ເພື່ອອຳນວຍຄວາມສະດວກໃຫ້ການສ້າງຕັ້ງ, ດຳເນີນ ແລະ ພັດທະນາທຸລະກິດ ເຮັດໃຫ້ຫຼຸດຜ່ອນຕົ້ນທຶນ, ເວລາໃນການສ້າງຕັ້ງ ແລະ ດຳເນີນທຸລະກິດ;

2. ຕິດຕາມ, ເກັບກຳຂໍ້ມູນ ແລະ ປະເມີນຜົນນິຕິກຳ ທັງກ່ອນ ແລະ ຫຼັງການຈັດຕັ້ງປະຕິບັດ ເພື່ອຮັບປະກັນປະສິດທິພາບ ແລະ ປະສິດທິຜົນຂອງການຈັດຕັ້ງປະຕິບັດນິຕິກຳ ທີ່ປະກາດໃຊ້ໃນແຕ່ລະໄລຍະ;

3. ສ້າງເງື່ອນໄຂ ແລະ ກົນໄກປຶກສາຫາລື ລະຫວ່າງ ພາກລັດ ແລະ ພາກທຸລະກິດ ເພື່ອແກ້ໄຂບັນຫາທີ່ເປັນການກີດໜ່ວງການພັດທະນາຂອງທຸລະກິດ;

4. ສ້າງ ແລະ ພັດທະນາບຸກຄະລະກອນ ເພື່ອຍົກສູງປະສິດທິພາບ ແລະ ປະສິດທິຜົນ ໃນການບໍລິການສ້າງຕັ້ງ ແລະ ເຄື່ອນໄຫວທຸລະກິດ.

**ມາດຕາ 15 (ປັບປຸງ) ການເຂົ້າເຖິງແຫຼ່ງທຶນ**

ລັດ ສົ່ງເສີມໃຫ້ ຈນກ ໃນການເຂົ້າເຖິງແຫຼ່ງທຶນ ດັ່ງນີ້:

1. ປັບປຸງໂຄງລ່າງ ແລະ ສະພາບແວດລ້ອມດ້ານສິນເຊື່ອ, ສ້າງຄວາມເຂັ້ມແຂງຂອງທະນາຄານທຸລະກິດ ແລະ ສະຖາບັນການເງິນອື່ນ ໃຫ້ສາມາດສະໜອງສິນເຊື່ອແກ່ ຈນກ ທີ່ແທດເໝາະຕາມສະພາບຕົວຈິງຢ່າງມີ ປະສິດທິພາບ ແລະ ປະສິດທິຜົນ;

2. ສ້າງຄວາມເຂັ້ມແຂງໃຫ້ ຈນກ ຮູ້ຫຼັກການ ແລະ ວິທີການ ເຂົ້າເຖິງແຫຼ່ງທຶນ ພ້ອມທັງຮູ້ກ່ຽວກັບຫຼັກການຂອງການບໍລິຫານດ້ານ ການເງິນ, ການບັນຊີ;

3. ສະໜອງທຶນໃຫ້ທະນາຄານທຸລະກິດ ແລະ ສະຖາບັນການເງິນອື່ນ ເພື່ອສະໜອງສິນເຊື່ອໃຫ້ ຈນກ ໃນອັດຕາດອກເບ້ຍ, ໄລຍະເວລາ ແລະ ເງື່ອນໄຂທີ່ເໝາະສົມ ໂດຍໃຫ້ບູລິມະສິດແກ່ ຈນກ ທີ່ ຢູ່ເຂດຊົນນະບົດ ແລະ ຫ່າງໄກສອກຫຼີກ;

4. ຄົ້ນຄວ້າສ້າງຕັ້ງສະຖາບັນການເງິນສະເພາະ ເພື່ອສະໜອງສິນເຊື່ອ ໃຫ້ ຈນກ.

ທະນາຄານແຫ່ງ ສປປ ລາວ ຄົ້ນຄວ້າ ແລະ ກຳນົດມາດຕະການຕ່າງໆ ເພື່ອຊຸກຍູ້, ສົ່ງເສີມ ແລະ ສ້າງເງື່ອນໄຂໃຫ້ທະນາຄານທຸລະກິດ ແລະ ສະຖາບັນການເງິນອື່ນ ອອກຜະລິດຕະພັນດ້ານການເງິນຫຼາຍປະເພດໃນການສະໜອງສິນເຊື່ອ ເຊັ່ນ ການຄ້ຳປະກັນສິນເຊື່ອ, ການເຊົ່າສິນເຊື່ອ, ການຮ່ວມລົງທຶນ ແລະ ອື່ນໆ ເພື່ອຮັບປະກັນໃຫ້ ຈນກ ສາມາດເຂົ້າເຖິງແຫຼ່ງທຶນໄດ້ ສະດວກ, ກວ້າງຂວາງ ແລະ ທົ່ວເຖິງ.

ກະຊວງການເງິນ ແລະ ກະຊວງອຸດສາຫະກຳ ແລະ ການຄ້າ ເປັນເຈົ້າການຄົ້ນຄວ້າກຳນົດຫຼັກການ, ລະບຽບການ ແລະ ວິທີການລະອຽດ ກ່ຽວກັບການສົ່ງເສີມການເຂົ້າເຖິງແຫຼ່ງທຶນ ສຳລັບ ຈນກ ໃຫ້ມີຄວາມເປັນເອກະພາບ, ສະດວກ, ວ່ອງໄວ ແລະ ຮັບປະກັນປະສິດທິພາບ.

**ມາດຕາ 16 (ປັບປຸງ) ການໃຫ້ນະໂຍບາຍດ້ານ ພາສີ, ອາກອນ ແລະ ບັນຊີ**

ລັດ ໃຫ້ນະໂຍບາຍສົ່ງເສີມ ຈນກ ດ້ານ ພາສີ, ອາກອນ ແລະ ບັນຊີ ດັ່ງນີ້:

1. ໃຫ້ນະໂຍບາຍສົ່ງເສີມດ້ານ ພາສີ ແລະ ອາກອນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍທີ່ກ່ຽວຂ້ອງ;

2. ໃຫ້ນະໂຍບາຍສົ່ງເສີມພິເສດດ້ານພາສີ ແລະ ອາກອນ ຕາມການຕົກລົງຂອງຄະນະປະຈຳສະພາແຫ່ງຊາດ ບົນພື້ນຖານການສະເໜີຂອງລັດຖະບານ ສຳລັບ ຈນກ ທີ່ສ້າງຕັ້ງຂຶ້ນໃໝ່, ທຸລະກິດແບບສະຕາດອັບ, ທຸລະກິດທີ່ຮັບໃຊ້ນະໂຍບາຍສະເພາະດ້ານໃດໜຶ່ງຂອງລັດຖະບານ, ທຸລະກິດທີ່ໄດ້ຮັບຜົນກະທົບຈາກໄພພິບັດ ຫຼື ວິກິດການ ແລະ ອື່ນໆ;

3. ຊຸກຍູ້, ສົ່ງເສີມ ການພັດທະນາລະບົບບັນຊີ ແລະ ສ້າງກົນໄກ ນຳໃຊ້ລະບົບບັນຊີທີ່ສະດວກ, ງ່າຍດາຍ ແລະ ເໝາະສົມ ກັບ ຈນກ ແຕ່ລະຂະໜາດ ເພື່ອເປັນພື້ນຖານຄິດໄລ່ອາກອນ.

**ມາດຕາ 17 (ປັບປຸງ) ການສ້າງ ແລະ ພັດທະນາ ຜູ້ປະກອບກິດຈະການ**

ລັດ ສົ່ງເສີມການສ້າງ ແລະ ພັດທະນາ ຜູ້ປະກອບກິດຈະການ ດັ່ງນີ້:

1. ສົ່ງເສີມພາກສ່ວນຕ່າງໆ ສ້າງສູນຝຶກ ແລະ ຝຶກອົບຮົມ ເພື່ອສ້າງ ແລະ ພັດທະນາ ຜູ້ປະກອບກິດຈະການ ໂດຍສະເພາະຜູ້ປະກອບກິດຈະການ ເພດຍິງ, ໄວໜຸ່ມ ແລະ ຄົນພິການ ໃຫ້ຮູ້ກ່ຽວກັບການເລີ່ມຕົ້ນ ແລະ ດຳເນີນທຸລະກິດໃນຮູບແບບຕ່າງໆ;

2. ສົ່ງເສີມ ແລະ ສ້າງເງື່ອນໄຂ ໃຫ້ເກີດມີທຸລະກິດແບບສະຕາດອັບ, ທຸລະກິດແຟຣນຊາຍ, ທຸລະກິດ ເພື່ອສັງຄົມ ແລະ ຮູບແບບອື່ນ ທີ່ກະຕຸ້ນໃຫ້ເກີດມີຜູ້ປະກອບກິດຈະການໃໝ່;

3. ໃຫ້ການຊ່ວຍເຫຼືອ ຜູ້ປະກອບກິດຈະການໃນການພັດທະນາຕົນເອງ ດ້ວຍການຈັດຝຶກອົບຮົມ, ສະໜອງທຶນສົມທົບ ຫຼື ສ້າງເງື່ອນໄຂ ໃຫ້ໄດ້ເຂົ້າຮ່ວມການຍົກລະດັບຄວາມຮູ້ ທັງຢູ່ພາຍໃນ ແລະ ຕ່າງປະເທດ;

4. ສ້າງ ແລະ ບັນຈຸການຮຽນຮູ້ ກ່ຽວກັບການປະກອບກິດຈະການ ເຂົ້າໃນຫຼັກສູດໃນລະບົບການສຶກສາ;

5. ສົ່ງເສີມການຈັດກິດຈະກຳ ກ່ຽວກັບການສ້າງຜູ້ປະກອບກິດຈະການ ເຊັ່ນ ການແຂ່ງຂັນແຜນທຸລະກິດ, ຈຳລອງການປະກອບກິດຈະການ ແລະ ການຍ້ອງຍໍຜູ້ປະກອບກິດຈະການດີເດັ່ນ.

**ມາດຕາ 18 (ປັບປຸງ) ການບໍລິການວິຊາການ ເພື່ອພັດທະນາທຸລະກິດ**

ລັດ ສົ່ງເສີມການບໍລິການວິຊາການ ເພື່ອພັດທະນາທຸລະກິດ ດັ່ງນີ້:

1. ຊຸກຍູ້, ສົ່ງເສີມ, ສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກໃຫ້ພາກສ່ວນຕ່າງໆ ສ້າງຕັ້ງໜ່ວຍງານ ຫຼື ວິສາຫະກິດ ໃຫ້ບໍລິການວິຊາການ ເພື່ອພັດທະນາທຸລະກິດ;

2. ສົ່ງເສີມການສ້າງຊ່ຽວຊານດ້ານຕ່າງໆ ແລະ ການສ້າງເຄືອຂ່າຍຜູ້ສະໜອງບໍລິການວິຊາການ ເພື່ອໃຫ້ບໍລິການແກ່ ຈນກ ຢ່າງກວ້າງຂວາງ ແລະ ແທດເໝາະກັບຄວາມຕ້ອງການ ເປັນຕົ້ນ ເຂດຊົນນະບົດ ແລະ ຫ່າງໄກສອກຫຼີກ;

3. ໃຫ້ການສະໜັບສະໜູນທາງດ້ານທຶນ ໃນຮູບແບບຕ່າງໆ ໃຫ້ ຈນກ ເພື່ອເຂົ້າເຖິງການບໍລິການວິຊາການ ເພື່ອພັດທະນາທຸລະກິດ.

**ມາດຕາ 19 (ປັບປຸງ) ການຮ່ວມມື ລະຫວ່າງ ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ກັບວິສາຫະກິດຂະໜາດໃຫຍ່**

ລັດ ສົ່ງເສີມການຮ່ວມມືລະຫວ່າງ ຈນກ ກັບວິສາຫະກິດຂະໜາດໃຫຍ່ ດັ່ງນີ້:

1. ສ້າງນະໂຍບາຍ ແລະ ກົນໄກ ທີ່ເອື້ອອຳນວຍ ເພື່ອໃຫ້ມີການຮ່ວມມືກັນ ລະຫວ່າງ ຈນກ ກັບວິສາຫະກິດຂະໜາດໃຫຍ່;

2. ຊຸກຍູ້ວິສາຫະກິດຂະໜາດໃຫຍ່ ໃຫ້ໂອກາດ ແລະ ບຸລິມະສິດແກ່ ຈນກ ເປັນຜູ້ສະໜອງວັດຖຸດິບ, ວັດຖຸເຄິ່ງສຳເລັດຮູບ, ສິນຄ້າ ແລະ ການບໍລິການ ລວມທັງການຮັບເໝົາຕໍ່ຊ່ວງ ພ້ອມທັງສ້າງຄວາມເຂັ້ມແຂງໃຫ້ ຈນກ ໂດຍການຖ່າຍທອດເຕັກໂນໂລຊີ ແລະ ຄວາມຮູ້ຄວາມສາມາດທາງດ້ານການບໍລິຫານ;

3. ສ້າງເງື່ອນໄຂໃຫ້ ຈນກ ແລະ ວິສາຫະກິດຂະໜາດໃຫຍ່ ໄດ້ພົບປະ ແລະ ແລກປ່ຽນຂໍ້ມູນ ດ້ວຍຮູບແບບຕ່າງໆ ເພື່ອສ້າງໂອກາດທາງທຸລະກິດຮ່ວມກັນ;

4. ຊຸກຍູ້, ສົ່ງເສີມ ຈນກ ໃນການປັບປຸງຄວາມສາມາດບໍລິຫານຈັດການ ແລະ ພັດທະນາເຕັກໂນໂລຊີ ເພື່ອຮັບປະກັນການສະໜອງ ວັດຖຸດິບ, ວັດຖຸເຄິ່ງສຳເລັດຮູບ, ສິນຄ້າ ແລະ ການບໍລິການ ໃຫ້ມີຄຸນນະພາບ ແລະ ມີປະລິມານພຽງພໍກັບຄວາມຕ້ອງການຂອງວິສາຫະກິດຂະໜາດໃຫຍ່.

**ມາດຕາ 20 (ປັບປຸງ) ການເພີ່ມຜະລິດຕະພາບ ແລະ ຄຸນນະພາບ**

ລັດ ສົ່ງເສີມ ຈນກ ເພື່ອເພີ່ມຜະລິດຕະພາບ ແລະ ຄຸນນະພາບ ດັ່ງນີ້:

1. ປັບປຸງແບບແຜນວິທີເຮັດວຽກ ແລະ ພັດທະນາສີມືແຮງງານ, ຍົກສູງສະຕິການອອກແຮງງານໄປສູ່ຮູບແບບອຸດສາຫະກຳທັນສະໄໝ ແລະ ມີລັກສະນະປະດິດສ້າງ ເພື່ອຍົກສູງຄວາມສາມາດໃນການແຂ່ງຂັນ ແລະ ການພັດທະນາແບບຍືນຍົງ ຂອງ ຈນກ;

2. ສົ່ງເສີມ ແລະ ຊ່ວຍເຫຼືອ ຜູ້ປະກອບກິດຈະການ ໃຫ້ໄດ້ຮັບການບໍລິການຄຳປຶກສາ ເພື່ອໃຫ້ ຈນກ ໄດ້ຮັບການຢັ້ງຢືນດ້ານຜະລິດຕະພາບ ແລະ ຄຸນນະພາບລະດັບຊາດ ແລະ ສາກົນ ເຊັ່ນ ລະບົບບໍລິຫານຈັດການດ້ານອາຫານປອດໄພ, ລະບົບບໍລິຫານຈັດການດ້ານຄຸນນະພາບ, ລະບົບບໍລິຫານຈັດການດ້ານສິ່ງແວດລ້ອມ, ລະບົບບໍລິການຈັດການດ້ານການເພີ່ມຜະລິດຕະພາບ ແລະ ລະບົບອື່ນ;

3. ສະໜັບສະໜູນໂຄງການຕ່າງໆ ກ່ຽວກັບການຍົກສູງ ປະສິດທິພາບ ແລະ ປະສິດທິຜົນ ຂອງການຜະລິດສິນຄ້າ, ການຄ້າ ແລະ ການບໍລິການ ເຊັ່ນ ການບຳລຸງຍົກລະດັບຜູ້ປະກອບກິດຈະການ, ການພັດທະນາສີມືແຮງງານ, ການນຳໃຊ້ເຕັກໂນໂລຊີທີ່ກ້າວໜ້າ, ການປັບປຸງຄຸນນະພາບ ແລະ ມາດຕະຖານຜະລິດຕະພັນ ແລະ ການບໍລິການ.

ມາດຕາ 21 (ປັບປຸງ) ການເຂົ້າເຖິງ ແລະ ຂະຫຍາຍ ຕະຫຼາດ

ລັດ ສົ່ງເສີມ ຈບກ ເພື່ອສາມາດເຂົ້າເຖິງ ແລະ ຂະຫຍາຍ ຕະຫຼາດ ດັ່ງນີ້:

1. ສ້າງເງື່ອນໄຂໃຫ້ພາກສ່ວນຕ່າງໆ ຈັດງານວາງສະແດງສິນຄ້າ ແລະ ການບໍລິການ ຢູ່ພາຍໃນ ແລະ ຕ່າງປະເທດ ພ້ອມທັງສ້າງເງື່ອນໄຂ ແລະ ໃຫ້ການຊ່ວຍເຫຼືອ ຜູ້ປະກອບກິດຈະການ ສາມາດເຂົ້າຮ່ວມງານວາງສະແດງສິນຄ້າ ຢູ່ພາຍໃນ ແລະ ຕ່າງປະເທດ, ສ້າງເງື່ອນໄຂ ໃຫ້ມີການຈັບຄູ່ໃນການ ຊື້ ຂາຍ ສິນຄ້າ;

2. ສົ່ງເສີມໃຫ້ ຈບກ ເຂົ້າຮ່ວມໃນຕ່ອງໂສ້ມູນຄ່າເພີ່ມຢູ່ ພາຍໃນ, ພາກພື້ນ ແລະ ສາກົນ;

3. ສົ່ງເສີມການໂຄສະນາສິນຄ້າ ແລະ ການບໍລິການ ດ້ວຍຮູບແບບຕ່າງໆ ໂດຍປັບປຸງຂັ້ນຕອນ ແລະ ຂໍ້ຈຳກັດຕ່າງໆ ໃນການໂຄສະນາສິນຄ້າ ແລະ ການບໍລິການ ໃຫ້ສາມາດແຂ່ງຂັນຕະຫຼາດ ພາຍໃນ ແລະ ຕ່າງປະເທດ ເພື່ອສົ່ງເສີມການສົ່ງອອກ;

4. ສ້າງ ແລະ ພັດທະນາ ພລັດຟອມການຄ້າທາງເອເລັກໂຕຣນິກ ລວມທັງສ້າງເງື່ອນໄຂການຊຳລະສະສາງ ແລະ ການສົ່ງມອບສິນຄ້າ ແລະ ການບໍລິການ, ສ້າງເງື່ອນໄຂໃຫ້ ຈບກ ນຳໃຊ້ພລັດຟອມດັ່ງກ່າວ ເພື່ອໂຄສະນາ ແລະ ຈຳໜ່າຍສິນຄ້າ ທັງຢູ່ພາຍໃນ ແລະ ຕ່າງປະເທດ;

5. ຊຸກຍູ້, ສົ່ງເສີມການສຶກສາຄົ້ນຄວ້າ ກ່ຽວກັບຕະຫຼາດ ທັງພາຍໃນ ແລະ ຕ່າງປະເທດ ເພື່ອສະໜອງຂໍ້ມູນ ກ່ຽວກັບຄວາມຕ້ອງການຂອງຕະຫຼາດ ພ້ອມທັງໃຫ້ຄຳແນະນຳແກ່ຜູ້ປະກອບກິດຈະການ ໃຫ້ຜະລິດແທດເໝາະກັບຄວາມຕ້ອງການຂອງຕະຫຼາດ;

6. ຊຸກຍູ້ ແລະ ສົ່ງເສີມ ການແຂ່ງຂັນທາງທຸລະກິດ ໃຫ້ສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ມາດຕາ 22 (ປັບປຸງ) ການຮ່ວມກຸ່ມທຸລະກິດ

ລັດ ສົ່ງເສີມການຮ່ວມກຸ່ມທຸລະກິດ ຂອງ ຈບກ ດັ່ງນີ້:

1. ສົ່ງເສີມ ໃຫ້ມີການຮ່ວມມືກັນ ໃນການນຳໃຊ້ເຄື່ອງມືການຜະລິດ, ການຄ້າ ແລະ ສິ່ງອຳນວຍຄວາມສະດວກຕ່າງໆຮ່ວມກັນ ເພື່ອຫຼຸດຜ່ອນຕົ້ນທຶນ ການຜະລິດ, ການຄ້າ ແລະ ການບໍລິການ, ຍົກສູງຄວາມສາມາດໃນການສະໜອງສິນຄ້າ ແລະ ການບໍລິການ ເພື່ອເພີ່ມຄວາມສາມາດໃນການແຂ່ງຂັນ;

2. ສ້າງເງື່ອນໄຂ ໃຫ້ ຈບກ ມີການປຶກສາຫາລື, ເກັບກຳ ແລະ ສະໜອງຂໍ້ມູນ ໃຫ້ກັນກ່ຽວກັບຄວາມສາມາດຂອງ ການຜະລິດ, ການຄ້າ ແລະ ການບໍລິການ ເພື່ອນຳໃຊ້ທ່າແຮງຮ່ວມກັນ.

ມາດຕາ 23 (ປັບປຸງ) ການພັດທະນາສະຖານທີ່ປະກອບກິດຈະການ

ລັດ ສົ່ງເສີມການພັດທະນາສະຖານທີ່ປະກອບກິດຈະການ ດັ່ງນີ້:

1. ສ້າງ, ປັບປຸງ ນະໂຍບາຍ, ກົດໝາຍ ແລະ ລະບຽບການ ກ່ຽວກັບການພັດທະນາສະຖານທີ່ປະກອບກິດຈະການ ເປັນຕົ້ນ ເຂດການຜະລິດ, ສູນການຄ້າ, ຮ້ານຊຸບພະສິນຄ້າ ແລະ ຕະຫຼາດ, ນິຄົມອຸດສາຫະກຳ, ເຂດການລົງທຶນຕ່າງໆ;

2. ຊຸກຍູ້, ສົ່ງເສີມ ແລະ ອຳນວຍຄວາມສະດວກໃນການສ້າງໂຄງລ່າງພື້ນຖານ ໃຫ້ແກ່ສະຖານທີ່ປະກອບກິດຈະການ ແລະ ສ້າງເງື່ອນໄຂ ໃຫ້ຜູ້ປະກອບກິດຈະການ ຈບກ ສາມາດນຳໃຊ້ສະຖານທີ່ປະກອບກິດຈະການທີ່ໝັ້ນຄົງ ໃນການດຳເນີນທຸລະກິດ;

3. ຊຸກຍູ້, ສົ່ງເສີມພາກສ່ວນຕ່າງໆ ໃຫ້ປົກປ້ອງສະຖານທີ່ປະກອບກິດຈະການ ຂອງ ຈບກ ເພື່ອຫຼຸດຜ່ອນ ຫຼື ຫຼີກລ່ຽງຜົນກະທົບຈາກໂຄງການພັດທະນາຕ່າງໆ.

ຂະແໜງການອຸດສາຫະກຳ ແລະ ການຄ້າ ປະສານສົມທົບກັບຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ສ້າງແຜນກຳນົດສະຖານທີ່ປະກອບກິດຈະການ ທັງໄລຍະສັ້ນ ແລະ ໄລຍະຍາວ ເພື່ອຮອງຮັບການຂະຫຍາຍຕົວຂອງ ຈນກ ໃນແຕ່ລະໄລຍະ.

ມາດຕາ 24 (ປັບປຸງ) ການນຳໃຊ້ເຕັກໂນໂລຊີທີ່ກ້າວໜ້າ ແລະ ເປັນມິດຕໍ່ສິ່ງແວດລ້ອມ

ລັດ ສົ່ງເສີມ ຈນກ ນຳໃຊ້ເຕັກໂນໂລຊີທີ່ກ້າວໜ້າ ແລະ ເປັນມິດຕໍ່ສິ່ງແວດລ້ອມ ດັ່ງນີ້:

1. ຊຸກຍູ້, ສົ່ງເສີມ ຈນກ ຄົ້ນຄວ້າ ແລະ ນຳໃຊ້ເຕັກໂນໂລຊີທີ່ກ້າວໜ້າ ແລະ ເປັນມິດຕໍ່ສິ່ງແວດລ້ອມເຂົ້າໃນການຜະລິດສິນຄ້າ, ການຄ້າ ແລະ ການບໍລິການ;

2. ສະໜອງທຶນໃນຮູບແບບຕ່າງໆ ໃຫ້ ຈນກ ນຳໃຊ້ເຂົ້າໃນການປັບປຸງເຕັກໂນໂລຊີ ໃຫ້ທັນສະໄໝ ແລະ ແທດເໝາະກັບການດຳເນີນທຸລະກິດ;

3. ຊຸກຍູ້, ສົ່ງເສີມສະຖາບັນຄົ້ນຄວ້າ ແລະ ສະຖາບັນການສຶກສາ ຄົ້ນຄວ້າ ແລະ ພັດທະນາເຕັກໂນໂລຊີທີ່ກ້າວໜ້າ ແລະ ເປັນມິດຕໍ່ສິ່ງແວດລ້ອມ ເພື່ອຖ່າຍທອດໃຫ້ ຈນກ ນຳໃຊ້ເຂົ້າໃນການດຳເນີນການຜະລິດສິນຄ້າ, ການຄ້າ ແລະ ການບໍລິການ ໃຫ້ມີຜະລິດຕະພາບ ແລະ ຄຸນນະພາບສູງຂຶ້ນ ພ້ອມທັງເປັນມິດຕໍ່ສິ່ງແວດລ້ອມ.

ມາດຕາ 25 (ປັບປຸງ) ການນຳໃຊ້ ແລະ ປົກປ້ອງສິດທາງດ້ານຊັບສິນທາງປັນຍາ

ລັດ ສົ່ງເສີມ ຈນກ ນຳໃຊ້ ແລະ ປົກປ້ອງສິດທາງດ້ານຊັບສິນທາງປັນຍາ ດັ່ງນີ້:

1. ສ້າງເງື່ອນໄຂສະດວກ ໃຫ້ ຈນກ ປະດິດສ້າງ, ປະດິດຄິດແຕ່ງ, ສ້າງເສດຖະກິດພູມປັນຍາ ແລະ ນຳໃຊ້ສິດທາງດ້ານຊັບສິນທາງປັນຍາ;

2. ຊ່ວຍເຫຼືອ ຈນກ ຈົດທະບຽນ, ຄຸ້ມຄອງ ແລະ ປົກປ້ອງສິດທາງດ້ານຊັບສິນທາງປັນຍາ;

3. ໂຄສະນາ ເຜີຍແຜ່ ກົດໝາຍ ແລະ ລະບຽບການ ກ່ຽວກັບການນຳໃຊ້ ແລະ ການປົກປ້ອງສິດທາງດ້ານຊັບສິນທາງປັນຍາໃຫ້ ຈນກ ຮັບຮູ້ ຢ່າງທົ່ວເຖິງ ເພື່ອໃຫ້ຮູ້ວິທີການນຳໃຊ້, ການປົກປ້ອງ ແລະ ຜົນປະໂຫຍດ ທີ່ໄດ້ຮັບຈາກການປົກປ້ອງສິດທາງດ້ານຊັບສິນທາງປັນຍາ.

ມາດຕາ 26 (ປັບປຸງ) ການສະໜອງ ແລະ ການເຂົ້າເຖິງ ຂໍ້ມູນ ຂ່າວສານ

ລັດ ສົ່ງເສີມການສະໜອງ ແລະ ການເຂົ້າເຖິງ ຂໍ້ມູນ ຂ່າວສານ ໃຫ້ ຈນກ ດັ່ງນີ້:

1. ສະໜອງ ຂໍ້ມູນ ຂ່າວສານ ດ້ານນະໂຍບາຍ, ນິຕິກຳ ແລະ ຂໍ້ມູນ ຂ່າວສານອື່ນ ກ່ຽວກັບການດຳເນີນທຸລະກິດ ດ້ວຍຮູບແບບຕ່າງໆ ເປັນຕົ້ນ ຈັດກອງປະຊຸມເຜີຍແຜ່ ແນະນຳ, ເຜີຍແຜ່ໃນຮູບແບບ ເອເລັກໂຕຣນິກ, ປຶ້ມຄູ່ມື, ວາລະສານ, ແຜ່ນພັບໂຄສະນາ ຜ່ານພາຫະນະສື່ມວນຊົນ;

2. ສົ່ງເສີມ ທັງພາກລັດ ແລະ ພາກທຸລະກິດ ໃນການສ້າງສູນສະໜອງຂໍ້ມູນ ຂ່າວສານ ກ່ຽວກັບການດຳເນີນທຸລະກິດ ເພື່ອສະໜອງໃຫ້ ຈນກ ຢ່າງທົ່ວເຖິງ.

ມາດຕາ 27 (ໃໝ່) ການສົ່ງເສີມປັດໄຈດ້ານການຜະລິດ

ລັດ ສົ່ງເສີມປັດໄຈດ້ານການຜະລິດ ດັ່ງນີ້:

1. ຊຸກຍູ້, ສົ່ງເສີມພາກສ່ວນຕ່າງໆ ໃນການຄົ້ນຄວ້າສ້າງນະໂຍບາຍ ແລະ ນິຕິກຳ ກ່ຽວກັບການສົ່ງເສີມປັດໄຈດ້ານການຜະລິດຂອງ ຈນກ ເປັນຕົ້ນ ການຫຼຸດຜ່ອນຕົ້ນທຶນ ເຊັ່ນ ຫຼຸດຄ່າໄຟຟ້າ, ຄ່ານ້ຳປະປາ ແລະ ອື່ນໆ ທີ່ຕິດພັນກັບໂຄງປະກອບຕົ້ນທຶນການຜະລິດ;

2. ຊຸກຍູ້ ແລະ ຕິດຕາມ ກວດກາ ພາກສ່ວນທີ່ກ່ຽວຂ້ອງໃນການຈັດຕັ້ງປະຕິບັດນະໂຍບາຍ, ກົດໝາຍ ແລະ ລະບຽບການ ກ່ຽວກັບການສົ່ງເສີມປັດໃຈດ້ານການຜະລິດ ໃຫ້ມີ ປະສິດທິພາບ ແລະ ປະສິດທິຜົນ.

ມາດຕາ 28 (ໃໝ່) ການສົ່ງເສີມການປະດິດ ແລະ ນໍາໃຊ້ນະວັດຕະກໍາ

ລັດ ສົ່ງເສີມການປະດິດ ແລະ ນໍາໃຊ້ ນະວັດຕະກໍາ ດັ່ງນີ້:

1. ຊຸກຍູ້, ສົ່ງເສີມ ຈນກ ໃນການປະດິດ ແລະ ນໍາໃຊ້ນະວັດຕະກໍາດ້ານຕ່າງໆ ເປັນຕົ້ນ ນະວັດຕະກໍາດ້ານເຕັກໂນໂລຊີ ໃນການຜະລິດ, ການຕະຫຼາດ, ການອອກແບບ ແລະ ການຫຸ້ມຫໍ່ສິນຄ້າ, ການບໍລິຫານທຸລະກິດ ເພື່ອນໍາໃຊ້ເຂົ້າໃນການພັດທະນາທຸລະກິດ;

2. ສະໜັບສະໜູນທຶນ ໃຫ້ສະຖາບັນຄົ້ນຄວ້າ ແລະ ສະຖາບັນການສຶກສາ ຄົ້ນຄວ້າປະດິດນະວັດຕະກໍາດ້ານຕ່າງໆ ເພື່ອໃຫ້ ຈນກ ນໍາໃຊ້.

ມາດຕາ 29 (ໃໝ່) ການສົ່ງເສີມທຸລະກິດແບບສະຕາດອັບ

ລັດ ສົ່ງເສີມທຸລະກິດແບບສະຕາດອັບ ດັ່ງນີ້:

1. ຊຸກຍູ້, ສົ່ງເສີມ ໄວໜຸ່ມ, ເພດຍິງ, ຄົນພິການ, ຜູ້ປະກອບກິດຈະການ ນໍາໃຊ້ສະຕິປັນຍາ ແລະ ຄວາມຮູ້ທາງດ້ານວິທະຍາສາດ, ເຕັກໂນໂລຊີ, ນະວັດຕະກໍາ ແລະ ອື່ນໆ ເພື່ອສ້າງທຸລະກິດແບບສະຕາດອັບ ດ້ວຍການສ້າງຈິດສໍານຶກ, ສ້າງສູນຝຶກອົບຮົມ, ການໃຫ້ທຶນໄປທັດສະນະສຶກສາ, ໄປຍົກລະດັບໄລຍະສັ້ນ, ກາງ ແລະ ຍາວ;

2. ສ້າງເງື່ອນໄຂ, ສະຖານທີ່ເຮັດວຽກຮ່ວມ, ສູນກໍ່ສ້າງຜູ້ປະກອບກິດຈະການ, ສ້າງກິດຈະກໍາກະຕຸກຊຸກຍູ້ທຸລະກິດແບບສະຕາດອັບໃນຮູບແບບຕ່າງໆ ແລະ ສ້າງໂອກາດ ການເຂົ້າເຖິງຕະຫຼາດຂອງຜູ້ປະກອບກິດຈະການແບບສະຕາດອັບ;

3. ສ້າງລະບົບນິເວດທາງທຸລະກິດ ເພື່ອພັດທະນາທຸລະກິດແບບສະຕາດອັບ ດ້ວຍການອອກນິຕິກໍາ ແລະ ສ້າງເງື່ອນໄຂທີ່ຈໍາເປັນ ເພື່ອຮອງຮັບການສະໜອງທຶນ ໃຫ້ແກ່ທຸລະກິດແບບສະຕາດອັບ ຈາກແຫຼ່ງທຶນຕ່າງໆ ເປັນຕົ້ນ ຜູ້ລົງທຶນອິດສະລະ, ການລະດົມທຶນຈາກ ບຸກຄົນທົ່ວໄປ, ກອງທຶນຮ່ວມລົງທຶນ;

4. ຮັບຮູ້ ແລະ ໃຫ້ການຢັ້ງຢືນທຸລະກິດແບບສະຕາດອັບ ເພື່ອໃຫ້ສາມາດເຄື່ອນໄຫວໄດ້ ກ່ອນຂຶ້ນທະບຽນວິສາຫະກິດ ແລະ ຂໍອະນຸຍາດດໍາເນີນທຸລະກິດ ຕາມກໍານົດເວລາທີ່ລັດຖະບານອະນຸຍາດ.

ມາດຕາ 30 (ໃໝ່) ການເຂົ້າເຖິງການຈັດຊື້-ຈັດຈ້າງ

ລັດ ສົ່ງເສີມ ຈນກ ເຂົ້າເຖິງການຈັດຊື້-ຈັດຈ້າງ ດັ່ງນີ້:

1. ສ້າງເງື່ອນໄຂ ແລະ ໃຫ້ໂອກາດ ຈນກ ສາມາດເຂົ້າເຖິງການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ ແລະ ໂຄງການທີ່ລັດຮ່ວມທຶນ;

2.ສ້າງຄວາມເຂັ້ມແຂງໃຫ້ ຈນກ ສາມາດສະໜອງສິນຄ້າ ແລະ ການບໍລິການ ໃນປະລິມານ ແລະ ຄຸນນະພາບ ໂດຍສອດຄ່ອງກັບເງື່ອນໄຂຂອງຜູ້ຈັດຊື້-ຈັດຈ້າງ.

## ພາກທີ IV
## ການວາງແຜນພັດທະນາຈຸລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ

ມາດຕາ 31 (ປັບປຸງ) ການວາງແຜນພັດທະນາຈຸລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ

ຄະນະກຳມະການສົ່ງເສີມ ຈນກ ແລະ ກະຊວງອຸດສາຫະກຳ ແລະ ການຄ້າ ເປັນເຈົ້າການຊີ້ນຳສຳນັກງານສົ່ງເສີມ ຈນກ ໃນການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຄົ້ນຄວ້າ ແລະ ວາງແຜນພັດທະນາ ຈນກ ເພື່ອນຳສະເໜີລັດຖະບານ ພິຈາລະນາ ແລະ ບັນຈຸ ເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ປະຈຳຫ້າປີ ແລະ ປະຈຳປີ.

ມາດຕາ 32 ການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດແຜນພັດທະນາ ຈຸລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ

ບັນດາຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນຕ່າງໆທີ່ກ່ຽວຂ້ອງ ມີໜ້າທີ່ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດແຜນພັດທະນາ ຈນກ ຕາມພາລະບົດບາດຂອງຕົນ.

ມາດຕາ 33 ການຕິດຕາມປະເມີນຜົນ ແລະ ການລາຍງານ

ກະຊວງອຸດສາຫະກຳ ແລະ ການຄ້າ ເປັນເຈົ້າການ ຊີ້ນຳສຳນັກງານສົ່ງເສີມ ຈນກ ໃນການຕິດຕາມປະເມີນຜົນການຈັດຕັ້ງປະຕິບັດແຜນພັດທະນາ ຈນກ ແຕ່ລະໄລຍະ.

ບັນດາຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຕ້ອງໃຫ້ການຮ່ວມມືໃນການສະໜອງຂໍ້ມູນ ແລະ ລາຍງານ ກ່ຽວກັບຜົນຂອງການຈັດຕັ້ງປະຕິບັດແຜນພັດທະນາ ຈນກ ຕໍ່ຂະແໜງການອຸດສາຫະກຳ ແລະ ການຄ້າ ຂັ້ນຂອງຕົນ ໃນແຕ່ລະໄລຍະ.

## ພາກທີ V
## ກອງທຶນສົ່ງເສີມຈຸລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ

ມາດຕາ 34 (ປັບປຸງ) ກອງທຶນສົ່ງເສີມຈຸລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ

ກອງທຶນສົ່ງເສີມ ຈນກ ຂຽນຫຍໍ້ວ່າ "ທສວ" ແມ່ນ ກອງທຶນທີ່ສ້າງຕັ້ງຂຶ້ນ ເພື່ອລະດົມ ແລະ ສະສົມທຶນຈາກແຫຼ່ງທຶນຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ ແນໃສ່ໃຫ້ມີທຶນພຽງພໍ, ໝູນວຽນ ນຳໃຊ້ເຂົ້າໃນການສົ່ງເສີມ ຈນກ ຢ່າງກວ້າງຂວາງ, ຕໍ່ເນື່ອງ, ຍືນຍົງ ແລະ ມີປະສິດທິຜົນ ໂດຍຢູ່ພາຍໃຕ້ການຄຸ້ມຄອງ ແລະ ກວດກາຂອງກະຊວງອຸດສາຫະກຳ ແລະ ການຄ້າ ແລະ ກະຊວງການເງິນ.

ແຂວງ, ນະຄອນຫຼວງ ທີ່ມີເງື່ອນໄຂ ສາມາດສ້າງຕັ້ງກອງທຶນສົ່ງເສີມ ຈນກ ເພື່ອລະດົມ ແລະ ສະສົມທຶນ ນຳໃຊ້ເຂົ້າໃນການສົ່ງເສີມ ຈນກ ພາຍໃນແຂວງ, ນະຄອນຫຼວງ ຂອງຕົນ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ສຳລັບການສ້າງຕັ້ງ, ການຄຸ້ມຄອງ ແລະ ການເຄື່ອນໄຫວຂອງກອງທຶນສົ່ງເສີມ ຈນກ ຢູ່ຂັ້ນສູນກາງ ແລະ ຂັ້ນແຂວງ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 35 (ປັບປຸງ) ຈຸດປະສົງຂອງ ກອງທຶນສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ**

ການສ້າງຕັ້ງ ທສວ ມີຈຸດປະສົງ ດັ່ງນີ້:

1. ເປັນບ່ອນລະດົມທຶນຈາກແຫຼ່ງຕ່າງໆ ແນໃສ່ຮັບປະກັນໃຫ້ມີທຶນທີ່ໝັ້ນຄົງ ແລະ ຕໍ່ເນື່ອງເຂົ້າໃນການສົ່ງເສີມ ຈນກ ໃຫ້ມີປະສິດທິຜົນ;

2. ເປັນແຫຼ່ງທຶນສະໜອງ ໃຫ້ທະນາຄານທຸລະກິດ ແລະ ສະຖາບັນການເງິນອື່ນ ນໍາໃຊ້ເຂົ້າໃນການສະໜອງສິນເຊື່ອໃຫ້ແກ່ ຈນກ;

3. ເປັນແຫຼ່ງທຶນຈັດຕັ້ງປະຕິບັດໂຄງການວິຊາການ ເພື່ອປັບປຸງສະພາບແວດລ້ອມດ້ານທຸລະກິດ, ສ້າງຄວາມເຂັ້ມແຂງ ແລະ ຄວາມສາມາດໃນການແຂ່ງຂັນຂອງ ຈນກ;

4. ເປັນເຄື່ອງມືດຶງດູດສິນການສະໜອງສິນເຊື່ອ ເພື່ອສ້າງເງື່ອນໄຂໃຫ້ ຈນກ ສາມາດເຂົ້າເຖິງແຫຼ່ງທຶນໄດ້ຫຼາຍຂຶ້ນ ໂດຍມີດອກເບ້ຍ ແລະ ໄລຍະການກູ້ຢືມທີ່ເໝາະສົມ ຕາມນະໂຍບາຍຂອງລັດຖະບານໃນແຕ່ລະໄລຍະ.

**ມາດຕາ 36 (ປັບປຸງ) ແຫຼ່ງທຶນຂອງກອງທຶນສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ**

ແຫຼ່ງທຶນຂອງ ທສວ ໄດ້ມາຈາກແຫຼ່ງຕ່າງໆ ດັ່ງນີ້:

1. ການປະກອບທຶນຂອງລັດຖະບານໃນແຕ່ລະໄລຍະ;
2. ການຊ່ວຍເຫຼືອລ້າ;
3. ການກູ້ຢືມຈາກ ພາຍໃນ ຫຼື ຕ່າງປະເທດ;
4. ການປະກອບສ່ວນຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ດ້ວຍຄວາມສະໝັກໃຈ;
5. ລາຍຮັບຈາກການບໍລິຫານກອງທຶນ;
6. ແຫຼ່ງທຶນອື່ນ ທີ່ຖືກຕ້ອງຕາມກົດໝາຍ.

**ມາດຕາ 37 (ໃໝ່) ລາຍຮັບຈາກການບໍລິຫານກອງທຶນສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ**

ລາຍຮັບຈາກການບໍລິຫານ ທສວ ມີ ດັ່ງນີ້:

1. ດອກເບ້ຍ ແລະ ລາຍຮັບຈາກການສະໜອງສິນເຊື່ອ;
2. ລາຍຮັບອື່ນຈາກການເຄື່ອນໄຫວຂອງ ທສວ ທີ່ຖືກຕ້ອງຕາມກົດໝາຍ.

ລາຍຮັບຈາກການບໍລິຫານຂອງ ທສວ ແມ່ນ ຮັບເຂົ້າບັນຊີສະເພາະຂອງ ທສວ ຢູ່ຄັງເງິນແຫ່ງຊາດ ແລະ ນໍາໃຊ້ ຕາມເປົ້າໝາຍທີ່ກໍານົດໄວ້ໃນມາດຕາ 39 ຂອງກົດໝາຍສະບັບນີ້.

**ມາດຕາ 38 (ປັບປຸງ) ການຄຸ້ມຄອງລາຍຮັບ-ລາຍຈ່າຍ ຂອງກອງທຶນສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ**

ລາຍຮັບ-ລາຍຈ່າຍຂອງ ທສວ ຕ້ອງມອບໃນແຜນງົບປະມານແຫ່ງລັດປະຈໍາປີ, ຈັດຕັ້ງປະຕິບັດຜ່ານລະບົບຄັງເງິນແຫ່ງຊາດ ຫຼື ທະນາຄານທຸລະກິດ ທີ່ໄດ້ຮັບອະນຸຍາດຈາກລັດຖະບານ.

ທຸກລາຍຮັບ-ລາຍຈ່າຍ ຂອງ ທສວ ຕ້ອງຢູ່ພາຍໃຕ້ການຄຸ້ມຄອງ, ຕິດຕາມ ກວດກາຂອງກະຊວງອຸດສາຫະກໍາ ແລະ ການຄ້າ ແລະ ກະຊວງການເງິນ.

ມາດຕາ 39 (ໃໝ່) ການນຳໃຊ້ທຶນຂອງກອງທຶນສົ່ງເສີມວຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ

ການນຳໃຊ້ທຶນຂອງ ທສວ ມີ ດັ່ງນີ້:

1. ສະໜອງສິນເຊື່ອ;
2. ສະໜອງທຶນໃຫ້ໂຄງການວິຊາການ;
3. ຊຳລະຕົ້ນທຶນ ແລະ ດອກເບ້ຍເງິນກູ້;
4. ໃຊ້ຈ່າຍບໍລິຫານ.

ມາດຕາ 40 (ໃໝ່) ການສະໜອງສິນເຊື່ອ

ກອງທຶນສົ່ງເສີມ ຈນກ ສາມາດສະໜອງສິນເຊື່ອ ໃຫ້ ຈນກ ໃນຮູບແບບຕ່າງໆ ດັ່ງນີ້:

1. ສິນເຊື່ອ ຜ່ານທະນາຄານທຸລະກິດ ຫຼື ສະຖາບັນການເງິນອື່ນ ເພື່ອເປັນທຶນໃນການເຄື່ອນໄຫວທຸລະກິດ ຂອງ ຈນກ;

2. ສິນເຊື່ອ ເພື່ອຊ່ວຍຟື້ນຟູ ຈນກ ທີ່ມີບັນຫາດ້ານການເງິນ ແຕ່ມີຄວາມສາມາດໃນການຜະລິດ ແລະ ມີຕະຫຼາດຮອງຮັບ ທີ່ໝັ້ນຄົງ;

3. ສິນເຊື່ອ ໃນຮູບແບບການລົງທຶນຮ່ວມກັບ ຈນກ ທີ່ມີແຜນທຸລະກິດທີ່ດີມີທ່າແຮງໃນການຂະຫຍາຍທຸລະກິດ ແຕ່ບໍ່ສາມາດ ເຂົ້າເຖິງແຫຼ່ງທຶນໄດ້ ຍ້ອນຂາດຫຼັກຊັບຄໍ້າປະກັນ;

4. ສິນເຊື່ອ ໃນຮູບແບບປະກອບທຶນ ໃຫ້ກອງທຶນອື່ນທີ່ມີເງື່ອນໄຂ ເພື່ອສະໜອງຕໍ່ໃຫ້ ຈນກ ເປັນຕົ້ນ ຜູ້ປະກອບກິດຈະການໃໝ່, ທຸລະກິດແບບສະຕາດອັບ ແລະ ການສົ່ງເສີມນະວັດຕະກຳ;

5. ສິນເຊື່ອໃນຮູບແບບອື່ນ ທີ່ເຫັນວ່າມີປະສິດທິຜົນ.

ມາດຕາ 41 (ໃໝ່) ການສະໜອງທຶນໃຫ້ໂຄງການວິຊາການ

ກອງທຶນສົ່ງເສີມ ຈນກ ສາມາດສະໜອງທຶນໃຫ້ໂຄງການວິຊາການ ເພື່ອໃຫ້ ຈນກ, ການຈັດຕັ້ງລັດ ແລະ ການຈັດຕັ້ງພາກທຸລະກິດ ທີ່ຈັດຕັ້ງປະຕິບັດວຽກງານສົ່ງເສີມ ຈນກ ໃນຮູບແບບຕ່າງໆ ດັ່ງນີ້:

1. ສະໜອງທຶນ ເພື່ອຈັດຕັ້ງປະຕິບັດກິດຈະກຳຕ່າງໆ ເຊັ່ນ ການຝຶກອົບຮົມ, ການປະຊຸມສຳມະນາດ້ານວິຊາການ, ການວາງສະແດງ, ການຈັດຈ້າງຜູ້ຊ່ຽວຊານດ້ານຕ່າງໆ, ການທັດສະນະສຶກສາແລກປ່ຽນບົດຮຽນຂອງຜູ້ປະກອບກິດຈະການ, ການປັບປຸງ ຫຼື ຍົກລະດັບເຕັກໂນໂລຊີ, ການພັດທະນາຜະລິດຕະພາບ ແລະ ຄຸນນະພາບ, ການປັບປຸງແຜນການຕະຫຼາດ, ການປະດິດນະວັດຕະກຳ, ການດຳເນີນທຸລະກິດແບບສະຕາດອັບ ແລະ ການປັບປຸງທຸລະກິດດ້ານອື່ນ;

2. ສະໜອງທຶນສົມທົບ ເພື່ອໃຫ້ ຈນກ ນຳໃຊ້ເຂົ້າໃນການຈັດຊື້ອຸປະກອນ, ເຄື່ອງມື ເພື່ອປັບປຸງການດຳເນີນງານ ແລະ ເຄື່ອງຈັກຕ່າງໆ ຮັບໃຊ້ເຂົ້າໃນການຜະລິດ.

ໂຄງການວິຊາການ ທີ່ຈະໄດ້ຮັບການສະໜອງທຶນ ຕ້ອງສອດຄ່ອງກັບນະໂຍບາຍ ທີ່ກຳນົດໄວ້ໃນມາດຕາ 13 ຂອງກົດໝາຍສະບັບນີ້, ແຜນພັດທະນາ ຈນກ ຂອງລັດຖະບານ, ແຂວງ, ນະຄອນຫຼວງ ໄດ້ວາງອອກ ໃນແຕ່ລະໄລຍະ.

ມາດຕາ 42 (ໃໝ່) ການຊຳລະຕົ້ນທຶນ ແລະ ດອກເບ້ຍເງິນກູ້

ກອງທຶນສົ່ງເສີມ ຈນກ ຕ້ອງຈັດສັນງົບປະມານໃຫ້ພຽງພໍ ເພື່ອຊຳລະຕົ້ນທຶນ ແລະ ດອກເບ້ຍເງິນກູ້ໃຫ້ຄົບຖ້ວນ ແລະ ຖືກຕ້ອງ ຕາມກຳນົດເວລາທີ່ໄດ້ກຳນົດໄວ້ໃນສັນຍາກູ້ຢືມ.

ກະຊວງການເງິນ ແລະ ພາກສ່ວນທີ່ກ່ຽວຂ້ອງ ອຳນວຍຄວາມສະດວກໃນການຊຳລະຕົ້ນທຶນ ແລະ ດອກເບ້ຍເງິນກູ້ ໃຫ້ສາມາດຊຳລະຖືກຕ້ອງ ຕາມກຳນົດເວລາທີ່ໄດ້ກຳນົດໄວ້ໃນສັນຍາກູ້ຢືມ.

**ມາດຕາ 43 (ໃໝ່) ການໃຊ້ຈ່າຍບໍລິຫານ**

ການໃຊ້ຈ່າຍບໍລິຫານ ໃຫ້ນໍາໃຊ້ສໍາລັບການເຄື່ອນໄຫວວຽກງານຂອງ ທສວ ແລະ ຄະນະກໍາມະການສົ່ງເສີມ ຈນກ ຂັ້ນສູນກາງ ຕາມແຜນການເຄື່ອນໄຫວວຽກງານປະຈໍາປີ ແລະ ແຜນລາຍຈ່າຍປະຈໍາປີຂອງ ທສວ.

ລາຍລະອຽດ ກ່ຽວກັບການນໍາໃຊ້ໃນວຽກງານບໍລິຫານ ທສວ ແລະ ຄະນະກໍາມະການສົ່ງເສີມ ຈນກ ຂັ້ນສູນກາງ ໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 44 (ໃໝ່) ການສ້າງແຜນງົບປະມານປະຈໍາປີ**

ການສ້າງແຜນງົບປະມານປະຈໍາປີ ຂອງ ທສວ ແມ່ນ ສະພາບໍລິຫານ ທສວ ຄົ້ນຄວ້າ ກໍານົດແຜນແລ້ວ ນໍາສະເໜີລັດຖະມົນຕີກະຊວງອຸດສາຫະກໍາ ແລະ ການຄ້າ ເພື່ອດໍາເນີນຕາມຫຼັກການ ແລະ ຂັ້ນຕອນ ທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍງົບປະມານແຫ່ງລັດ.

**ມາດຕາ 45 (ໃໝ່) ການເບີກຈ່າຍທຶນຂອງກອງທຶນສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ**

ການເບີກຈ່າຍທຶນ ທສວ ໃຫ້ປະຕິບັດ ດັ່ງນີ້:

1. ລັດຖະມົນຕີກະຊວງອຸດສາຫະກໍາ ແລະ ການຄ້າ ເປັນຜູ້ອະນຸມັດເບີກຈ່າຍຈາກບັນຊີຂອງ ທສວ ທີ່ເປີດຢູ່ຄັງເງິນແຫ່ງຊາດ ເພື່ອໂອນໄປບັນຊີສະເພາະຂອງ ທສວ ທີ່ເປີດຢູ່ທະນາຄານທຸລະກິດ;
2. ຜູ້ອໍານວຍການ ທສວ ເປັນຜູ້ສັ່ງຈ່າຍຈາກບັນຊີ ຢູ່ທະນາຄານທຸລະກິດ ສໍາລັບການຈັດຕັ້ງປະຕິບັດໃນແຕ່ລະກິດຈະກໍາ;
3. ທຸກການເບີກຈ່າຍ ຕ້ອງນອນໃນແຜນງົບປະມານປະຈໍາປີ ຂອງ ທສວ;

ການຄິດໄລ່ການເບີກຈ່າຍຕ່າງໆ ໃຫ້ປະຕິບັດຕາມລະບຽບສະເພາະຂອງ ທສວ ໂດຍສອດຄ່ອງກັບນະໂຍບາຍຂອງລັດ, ເງື່ອນໄຂຜູ້ໃຫ້ທຶນກູ້ຢືມ ແລະ ລະບຽບການຄຸ້ມຄອງການເງິນ ແລະ ງົບປະມານແຫ່ງລັດ.

**ມາດຕາ 46 (ໃໝ່) ການບັນຊີ ແລະ ປີງົບປະມານ**

ກອງທຶນສົ່ງເສີມ ຈນກ ປະຕິບັດລະບົບບັນຊີ, ສາລະບານງົບປະມານ ແລະ ປື້ມຄູ່ມືການບໍລິຫານການເງິນ-ການບັນຊີສະເພາະ ຕາມເງື່ອນໄຂມາດຕະຖານບັນຊີ ແລະ ຜັງບັນຊີ ທີ່ກະຊວງການເງິນ ປະກາດໃຊ້ໃນແຕ່ລະໄລຍະ ເພື່ອຄຸ້ມຄອງລາຍຮັບ-ລາຍຈ່າຍ.

ລາຍຮັບ-ລາຍຈ່າຍງົບປະມານ ທັງໝົດຂອງ ທສວ ໃຫ້ເປີດບັນຊີຢູ່ຄັງເງິນແຫ່ງຊາດ ແລະ ທະນາຄານທຸລະກິດໃດໜຶ່ງ ຕາມການເຫັນດີຂອງລັດຖະບານ.

ປີງົບປະມານ ແລະ ການສະຫຼຸບລາຍງານຂອງ ທສວ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍງົບປະມານແຫ່ງລັດ ແລະ ກົດໝາຍວ່າດ້ວຍການບັນຊີ.

## ພາກທີ VI
## ການຈັດຕັ້ງ ກ່ຽວກັບວຽກງານສົ່ງເສີມ ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ

**ມາດຕາ 47 (ໃໝ່) ການຈັດຕັ້ງ ກ່ຽວກັບວຽກງານສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ**

ການຈັດຕັ້ງ ກ່ຽວກັບວຽກງານສົ່ງເສີມ ຈນກ ມີ ດັ່ງນີ້:

1. ຄະນະກໍາມະການສົ່ງເສີມ ຈນກ;

2. ສໍານັກງານສົ່ງເສີມ ຈນກ;

3. ການຈັດຕັ້ງສົ່ງເສີມ ຈນກ ຂອງພາກທຸລະກິດ.

## ໝວດທີ 1
## ຄະນະກໍາມະການສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ

**ມາດຕາ 48 (ໃໝ່) ຄະນະກໍາມະການສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ**

ຄະນະກໍາມະການສົ່ງເສີມ ຈນກ ແມ່ນ ການຈັດຕັ້ງທີ່ບໍ່ປະຈໍາການ ມີພາລະບົດບາດໃນການ ຄົ້ນຄວ້າ, ຊີ້ນໍາ, ຊຸກຍູ້ ແລະ ຕິດຕາມ ການຈັດຕັ້ງປະຕິບັດວຽກງານສົ່ງເສີມ ຈນກ.

ຄະນະກໍາມະການສົ່ງເສີມ ຈນກ ປະກອບດ້ວຍ ຄະນະກໍາມະການສົ່ງເສີມ ຈນກ ຂັ້ນສູນກາງ ແລະ ຂັ້ນແຂວງ.

**ມາດຕາ 49 (ໃໝ່) ຄະນະກໍາມະການສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ຂັ້ນສູນກາງ**

ຄະນະກໍາມະການສົ່ງເສີມ ຈນກ ຂັ້ນສູນກາງ ຂຽນຫຍໍ້ວ່າ "ຄສວສ" ຖືກແຕ່ງຕັ້ງໂດຍ ນາຍົກລັດຖະມົນຕີ ຕາມການສະເໜີຂອງ ກະຊວງອຸດສາຫະກໍາ ແລະ ການຄ້າ ຊຶ່ງມີຮອງນາຍົກລັດຖະມົນຕີເປັນປະທານ, ລັດຖະມົນຕີກະຊວງອຸດສາຫະກໍາ ແລະ ການຄ້າ ເປັນຮອງປະທານ ທັງເປັນຜູ້ປະຈໍາການ ແລະ ຄະນະກໍາມະການຈໍານວນໜຶ່ງຈາກ ພາກລັດ ແລະ ພາກທຸລະກິດ.

ຄະນະກໍາມະການສົ່ງເສີມ ຈນກ ຂັ້ນສູນກາງ ມີສໍານັກງານສົ່ງເສີມ ຈນກ ເປັນກອງເລຂາ.

**ມາດຕາ 50 (ໃໝ່) ສິດ ແລະ ໜ້າທີ່ຂອງຄະນະກໍາມະການສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ຂັ້ນສູນກາງ**

ຄະນະກໍາມະການສົ່ງເສີມ ຈນກ ຂັ້ນສູນກາງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ມີຄໍາເຫັນ ຕໍ່ ນະໂຍບາຍ, ແຜນພັດທະນາ ແລະ ນິຕິກໍາ ກ່ຽວກັບການສົ່ງເສີມ ຈນກ ໃນແຕ່ລະໄລຍະ;

2. ໂຄສະນາ ເຜີຍແຜ່ ນະໂຍບາຍ, ແຜນພັດທະນາ ແລະ ນິຕິກໍາ ກ່ຽວກັບການສົ່ງເສີມ ຈນກ;

3. ຊີ້ນໍາບັນດາກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ໃນການຫັນເອົານະໂຍບາຍ, ແຜນການ, ມະຕິຂອງລັດຖະບານ ມາເປັນແຜນການ, ແຜນງານ ແລະ ໂຄງການລະອຽດ ກ່ຽວກັບການສົ່ງເສີມ ຈນກ ເຊື່ອມສານເຂົ້າໃນແຜນພັດທະນາຂະແໜງການຕົນ;

4. ຊີ້ນໍາ, ຊຸກຍູ້, ຕິດຕາມ ກວດກາ ການເຄື່ອນໄຫວວຽກງານສົ່ງເສີມ ຈນກ ຂອງສໍານັກງານສົ່ງເສີມ ຈນກ, ການຈັດຕັ້ງປະຕິບັດວຽກງານສົ່ງເສີມ ຈນກ ຂອງບັນດາກະຊວງ, ການເຄື່ອນໄຫວວຽກງານຂອງ ຄສວຂ ແລະ ການຈັດຕັ້ງສົ່ງເສີມ ຈນກ ຂອງພາກທຸລະກິດ;

5. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານສົ່ງເສີມ ຈນກ ຂອງຕົນ ໃຫ້ລັດຖະບານໃນແຕ່ລະໄລຍະ;

6. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

ມາດຕາ 51 (ໃໝ່) ຄະນະກຳມະການສົ່ງເສີມຈຸລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ຂັ້ນແຂວງ

ຄະນະກຳມະການ ສົ່ງເສີມ ຈນກ ຂັ້ນແຂວງ ຂຽນຫຍໍ້ວ່າ "ຄສວຂ" ຖືກແຕ່ງຕັ້ງໂດຍເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ຕາມການສະເໜີຂອງພະແນກອຸດສາຫະກຳ ແລະ ການຄ້າ ຂັ້ນແຂວງ ຊຶ່ງມີຮອງເຈົ້າແຂວງເປັນປະທານ, ຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າ ເປັນຮອງປະທານ ທັງເປັນຜູ້ປະຈຳການ ແລະ ຄະນະກຳມະການຈຳນວນໜຶ່ງ ຈາກພາກລັດ ແລະ ພາກທຸລະກິດ.

ຄະນະກຳມະການສົ່ງເສີມ ຈນກ ຂັ້ນແຂວງ ມີພະແນກອຸດສາຫະກຳ ແລະ ການຄ້າ ຂັ້ນແຂວງ ເປັນກອງເລຂາ.

ມາດຕາ 52 (ໃໝ່) ສິດ ແລະ ໜ້າທີ່ຂອງຄະນະກຳມະການສົ່ງເສີມຈຸລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ຂັ້ນແຂວງ

ຄະນະກຳມະການສົ່ງເສີມ ຈນກ ຂັ້ນແຂວງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ໂຄສະນາ ເຜີຍແຜ່ ນະໂຍບາຍ, ແຜນພັດທະນາ ແລະ ນິຕິກຳ ກ່ຽວກັບການສົ່ງເສີມ ຈນກ ຢູ່ພາຍໃນແຂວງ, ນະຄອນຫຼວງຂອງຕົນ;

2. ຊີ້ນຳບັນດາພະແນກການ ແລະ ອົງການປົກຄອງຂັ້ນເມືອງ ນຳເອົາວຽກງານສົ່ງເສີມ ຈນກ ເຊື່ອມສານເຂົ້າໃນແຜນພັດທະນາຂະແໜງການຕົນ;

3. ຊີ້ນຳ, ຊຸກຍູ້, ຕິດຕາມ ກວດກາ ການເຄື່ອນໄຫວວຽກງານສົ່ງເສີມ ຈນກ ຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

4. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານສົ່ງເສີມ ຈນກ ຢູ່ພາຍໃນແຂວງ, ນະຄອນຫຼວງຂອງຕົນ ໃຫ້ຄະນະກຳມະການສົ່ງເສີມ ຈນກ ຂັ້ນສູນກາງ ໃນແຕ່ລະໄລຍະ;

5. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ໝວດທີ 2
## ສຳນັກງານສົ່ງເສີມຈຸລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ

ມາດຕາ 53 (ໃໝ່) ສຳນັກງານສົ່ງເສີມຈຸລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ

ສຳນັກງານສົ່ງເສີມ ຈນກ ຂຽນຫຍໍ້ວ່າ "ສຈນກ" ແມ່ນ ການຈັດຕັ້ງວິຊາການໜຶ່ງ ມີຖານະເທົ່າກັບກົມ, ສັງກັດຢູ່ກະຊວງອຸດສາຫະກຳ ແລະ ການຄ້າ ມີພາລະບົດບາດເປັນເສນາທິການ ໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ແລະ ຄສວສ ໃນການຈັດຕັ້ງປະຕິບັດ ແລະ ຄຸ້ມຄອງວຽກງານສົ່ງເສີມ ຈນກ.

ການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ສຈນກ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

ມາດຕາ 54 (ໃໝ່) ສິດ ແລະ ໜ້າທີ່ຂອງສຳນັກງານສົ່ງເສີມຈຸລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ

ສຳນັກງານສົ່ງເສີມ ຈນກ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ແຜນພັດທະນາ ແລະ ນິຕິກຳ ກ່ຽວກັບການສົ່ງເສີມ ຈນກ;

2. ໂຄສະນາ ເຜີຍແຜ່ ແລະ ຊຸກຍູ້ ການຈັດຕັ້ງປະຕິບັດ ນະໂຍບາຍ, ແຜນພັດທະນາ ແລະ ນິຕິກຳກ່ຽວກັບການສົ່ງເສີມ ຈນກ;

3. ຄົ້ນຄວ້າສ້າງນະໂຍບາຍສົ່ງເສີມ ແລະ ນິຕິກຳ ກ່ຽວກັບການສົ່ງເສີມ ຈນກ ເພື່ອສະເໜີຕໍ່ ຄສວສ ແລະ ລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ພິຈາລະນາ;

4. ຜັນຂະຫຍາຍການຈັດຕັ້ງປະຕິບັດນະໂຍບາຍສົ່ງເສີມ ຈນກ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 13 ຂອງກົດໝາຍສະບັບນີ້;

5. ຊຸກຍູ້ ແລະ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດນະໂຍບາຍສົ່ງເສີມ ຈນກ ຕາມທີ່ໄດ້ກຳນົດໃນມາດຕາ 13 ຂອງກົດໝາຍສະບັບນີ້ ຕາມຄວາມຮັບຜິດຊອບຂອງແຕ່ລະພາກສ່ວນ;

6. ຄຸ້ມຄອງການຈັດຕັ້ງປະຕິບັດວຽກງານຂອງ ຫສວ ຕາມລະບຽບການເຄື່ອນໄຫວຂອງ ຫສວ;

7. ຄົ້ນຄວ້າ, ກຳນົດຕຳແໜ່ງງານ ແລະ ສ້າງແຜນພັດທະນາບຸກຄະລາກອນ ໃນແຕ່ລະໄລຍະ ແລະ ສະເໜີຕົວເລກພະນັກງານ ແລະ ລັດຖະກອນໃໝ່ ຕາມຄວາມຈຳເປັນ ໃນແຕ່ລະປີ;

8. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງກັບ ພາກລັດ, ພາກທຸລະກິດ ໃນການຈັດຕັ້ງປະຕິບັດນະໂຍບາຍ ແລະ ແຜນພັດທະນາ ຈນກ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;

9. ລະດົມທຶນ ແລະ ສະໜອງທຶນ ໃຫ້ແກ່ໂຄງການກ່ຽວຂ້ອງກັບ ການສົ່ງເສີມ ຈນກ ທີ່ຈັດຕັ້ງປະຕິບັດໂດຍພາກສ່ວນອື່ນ;

10. ຍົກລະດັບຄວາມຮູ້, ຄວາມສາມາດດ້ານການສົ່ງເສີມ ຈນກ ໃຫ້ແກ່ພະນັກງານຂອງລັດ, ພາກທຸລະກິດ ແລະ ບັນດາພາກສ່ວນທີ່ກ່ຽວຂ້ອງກັບການສົ່ງເສີມ ຈນກ;

11. ພົວພັນ ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານສົ່ງເສີມ ຈນກ;

12. ປະສານສົມທົບກັບ ຄສວຂ ເພື່ອເກັບກຳ ແລະ ສັງລວມ ຜົນການຈັດຕັ້ງປະຕິບັດວຽກງານສົ່ງເສີມ ຈນກ ຢູ່ຂັ້ນທ້ອງຖິ່ນ ເພື່ອລາຍງານຕໍ່ລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ແລະ ຄສວສ ຢ່າງເປັນປົກກະຕິ;

13. ສະຫຼຸບ ແລະ ລາຍງານ ຜົນຂອງການເຄື່ອນໄຫວຈັດຕັ້ງປະຕິບັດວຽກງານສົ່ງເສີມ ຈນກ ໃຫ້ລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ແລະ ຄສວສ ຢ່າງເປັນປົກກະຕິ;

14. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ໝວດທີ 3
## ການຈັດຕັ້ງກ່ຽວກັບວຽກງານສົ່ງເສີມ
## ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ຂອງພາກທຸລະກິດ

**ມາດຕາ 55 (ໃໝ່) ການຈັດຕັ້ງກ່ຽວກັບວຽກງານສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງຂອງພາກທຸລະກິດ**

ການຈັດຕັ້ງກ່ຽວກັບວຽກງານສົ່ງເສີມ ຈນກ ຂອງພາກທຸລະກິດ ປະກອບດ້ວຍການຈັດຕັ້ງ ດັ່ງນີ້:

1. ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ;
2. ສະພາການຄ້າ ແລະ ອຸດສາຫະກຳ ແຂວງ, ນະຄອນຫຼວງ;
3. ສະມາຄົມສົ່ງເສີມ ຈນກ;
4. ການຈັດຕັ້ງອື່ນຂອງພາກທຸລະກິດ.

ມາດຕາ 56 (ປັບປຸງ) ສິດ ແລະ ໜ້າທີ່ຂອງການຈັດຕັ້ງກ່ຽວກັບວຽກງານສົ່ງເສີມຈຸລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ຂອງພາກທຸລະກິດ

ການຈັດຕັ້ງກ່ຽວກັບວຽກງານສົ່ງເສີມ ຈນກ ຂອງພາກທຸລະກິດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ເປັນຂົວຕໍ່ໃຫ້ແກ່ພາກລັດ ກັບພາກທຸລະກິດ ໃນການພົວພັນປະສານງານ, ການສະໜອງຂໍ້ມູນ, ການເຜີຍແຜ່ ນະໂຍບາຍ ແລະ ນິຕິກຳ ກ່ຽວກັບການສົ່ງເສີມ ຈນກ ໃຫ້ບັນດາຫົວໜ່ວຍທຸລະກິດ ຢ່າງກວ້າງຂວາງ ໃນຮູບແບບຕ່າງໆ;

2. ສ້າງຕັ້ງສູນ ຫຼື ໜ່ວຍງານ ເພື່ອສະໜອງການບໍລິການວິຊາການ ເພື່ອພັດທະນາທຸລະກິດ, ຂໍ້ມູນຂ່າວສານ ໃຫ້ ຈນກ ຢ່າງທັນການ ແລະ ທົ່ວເຖິງ;

3. ຄົ້ນຄວ້າ ແລະ ມີຄຳເຫັນ ຕໍ່ ນະໂຍບາຍ, ແຜນຍຸດທະສາດ ແລະ ນິຕິກຳ ກ່ຽວກັບການສົ່ງເສີມ ຈນກ;

4. ຈັດ ແລະ ເຂົ້າຮ່ວມ ງານວາງສະແດງສິນຄ້າ ຕາມຂອບເຂດສິດຂອງຕົນ;

5. ສະເໜີຍ້ອງຍໍ ຈນກ ທີ່ມີຜົນງານດີເດັ່ນໃນການເຄື່ອນໄຫວທຸລະກິດ, ປະກອບສ່ວນພັດທະນາ ແລະ ຊ່ວຍເຫຼືອສັງຄົມ;

6. ສະຫຼຸບ ແລະ ລາຍງານການປະຕິບັດວຽກງານສົ່ງເສີມ ຈນກ ທີ່ຕົນຮັບຜິດຊອບໃຫ້ຄະນະກຳມະການສົ່ງເສີມ ຈນກ ຢ່າງເປັນປົກກະຕິ;

7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ.

## ພາກທີ VII
## ຂໍ້ຫ້າມ

ມາດຕາ 57 ຂໍ້ຫ້າມສຳລັບການຈັດຕັ້ງ ແລະ ພະນັກສົ່ງເສີມຈຸລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ

ຫ້າມ ການຈັດຕັ້ງ ແລະ ພະນັກງານສົ່ງເສີມ ຈນກ ມີພຶດຕິກຳ ດັ່ງນີ້:

1. ເປີດເຜີຍຂໍ້ມູນທີ່ເປັນຄວາມລັບທາງດ້ານທຸລະກິດຂອງ ຈນກ ເວັ້ນເສຍແຕ່ໄດ້ຮັບອະນຸຍາດຈາກ ຈນກ ນັ້ນ;

2. ປອມແປງ, ບິດເບືອນຂໍ້ມູນສະເພາະຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງ ເພື່ອຜົນປະໂຫຍດສ່ວນຕົວ ຫຼື ສ້າງຄວາມເສຍຫາຍ ໃຫ້ແກ່ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ນັ້ນໂດຍເຈດຕະນາ;

3. ທວງ, ຮຽກເອົາ ຫຼື ຮັບສິນບົນຈາກຜູ້ປະກອບກິດຈະການ;

4. ລະເມີດຈັນຍາບັນຂອງພະນັກງານ;

5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

ມາດຕາ 58 ຂໍ້ຫ້າມສຳລັບຈຸລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ແລະ ຜູ້ປະກອບກິດຈະການ

ຫ້າມ ຈນກ ແລະ ຜູ້ປະກອບກິດຈະການ ມີພຶດຕິກຳ ດັ່ງນີ້:

1. ລາຍງານຂໍ້ມູນເທັດ ກ່ຽວກັບສະພາບການເຄື່ອນໄຫວທຸລະກິດຂອງຕົນ;

2. ປອມແປງ, ບິດເບືອນຂໍ້ມູນສະເພາະຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ ເພື່ອຜົນປະໂຫຍດຂອງທຸລະກິດຕົນ ຫຼື ສ້າງຄວາມເສຍຫາຍ ໃຫ້ແກ່ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ນັ້ນໂດຍເຈດຕະນາ;

3. ສະເໜີໃຫ້ ຫຼື ໃຫ້ສິນບົນແກ່ ການຈັດຕັ້ງ ແລະ ພະນັກງານສົ່ງເສີມ ຈນກ;

4. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

# ພາກທີ VIII
# ການຄຸ້ມຄອງ ແລະ ກວດກາວຽກງານ
# ສົ່ງເສີມຈຸລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ
## ໝວດທີ 1
## ການຄຸ້ມຄອງວຽກງານສົ່ງເສີມຈຸລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ

ມາດຕາ 59 (ປັບປຸງ) ອົງການຄຸ້ມຄອງວຽກງານສົ່ງເສີມຈຸລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ

ລັດຖະບານ ເປັນຜູ້ຄຸ້ມຄອງວຽກງານສົ່ງເສີມ ຈນກ ຢ່າງລວມສູນ ແລະ ເອກະພາບ ໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ຮັບຜິດຊອບ ໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບ ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງວຽກງານສົ່ງເສີມ ຈນກ ປະກອບດ້ວຍ:

1. ກະຊວງອຸດສາຫະກຳ ແລະ ການຄ້າ;
2. ພະແນກອຸດສາຫະກຳ ແລະ ການຄ້າ ຂັ້ນແຂວງ;
3. ຫ້ອງການອຸດສາຫະກຳ ແລະ ການຄ້າ ຂັ້ນເມືອງ.

ມາດຕາ 60 (ປັບປຸງ) ສິດ ແລະ ໜ້າທີ່ຂອງກະຊວງອຸດສາຫະກຳ ແລະ ການຄ້າ

ໃນການຄຸ້ມຄອງວຽກງານສົ່ງເສີມ ຈນກ ກະຊວງອຸດສາຫະກຳ ແລະ ການຄ້າ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ສ້າງນະໂຍບາຍ, ກົດໝາຍ, ແຜນພັດທະນາ ແລະ ລະບຽບການ ກ່ຽວກັບການສົ່ງເສີມ ຈນກ ເພື່ອສະເໜີລັດຖະບານພິຈາລະນາ;

2. ຜັນຂະຫຍາຍ ນະໂຍບາຍ, ກົດໝາຍ, ແຜນພັດທະນາ ແລະ ລະບຽບການ ກ່ຽວກັບການສົ່ງເສີມ ຈນກ;

3. ໂຄສະນາ ເຜີຍແຜ່ ແລະ ຊຸກຍູ້ການຈັດຕັ້ງປະຕິບັດ ນະໂຍບາຍ, ກົດໝາຍ, ແຜນພັດທະນາ ແລະ ລະບຽບການ ກ່ຽວກັບການສົ່ງເສີມ ຈນກ ຢ່າງກວ້າງຂວາງ ໃນຂອບເຂດທົ່ວປະເທດ;

4. ຄົ້ນຄວ້າກຳນົດເງື່ອນໄຂການຈັດແບ່ງຂະໜາດ ຈນກ ເພື່ອນຳສະເໜີຕໍ່ລັດຖະບານພິຈາລະນາຕົກລົງ ແລະ ປະກາດໃຊ້ໃນແຕ່ລະໄລຍະ;

5. ຊີ້ນຳການຈັດຕັ້ງປະຕິບັດນະໂຍບາຍສົ່ງເສີມ ຈນກ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ;

6. ຊຸກຍູ້ ແລະ ຕິດຕາມ ການຈັດຕັ້ງປະຕິບັດ ນະໂຍບາຍ, ກົດໝາຍ, ແຜນພັດທະນາ ແລະ ລະບຽບການ ກ່ຽວກັບການສົ່ງເສີມ ຈນກ;

7. ຊີ້ນຳການຈັດຕັ້ງປະຕິບັດວຽກງານຂອງສຳນັກງານສົ່ງເສີມ ຈນກ;

8. ຄົ້ນຄວ້າແກ້ໄຂຄຳສະເໜີຂອງພາກທຸລະກິດ ແລະ ພາກສ່ວນທີ່ກ່ຽວຂ້ອງ ກ່ຽວກັບວຽກງານສົ່ງເສີມ ຈນກ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;

9. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ທັງພາກລັດ ແລະ ພາກທຸລະກິດ ໃນການຈັດຕັ້ງປະຕິບັດນະໂຍບາຍ ແລະ ແຜນພັດທະນາ ຈນກ ຕາມຄວາມຮັບຜິດຊອບຂອງຕົນ;

10. ພົວພັນຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານສົ່ງເສີມ ຈນກ;

11. ສະຫຼຸບ ແລະ ລາຍງານຜົນຂອງການເຄື່ອນໄຫວຈັດຕັ້ງປະຕິບັດວຽກງານສົ່ງເສີມ ຈນກ ໃຫ້ລັດຖະບານ ຢ່າງເປັນປົກກະຕິ;

12. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 61 (ປັບປຸງ) ສິດ ແລະ ໜ້າທີ່ຂອງພະແນກອຸດສາຫະກຳ ແລະ ການຄ້າ ຂັ້ນແຂວງ**

ໃນການຄຸ້ມຄອງວຽກງານສົ່ງເສີມ ຈນກ ພະແນກອຸດສາຫະກຳ ແລະ ການຄ້າຂັ້ນແຂວງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ກົດໝາຍ, ແຜນພັດທະນາ ແລະ ລະບຽບການ ກ່ຽວກັບການສົ່ງເສີມ ຈນກ ພາຍໃນແຂວງ, ນະຄອນຫຼວງຂອງຕົນ;

2. ໂຄສະນາ ເຜີຍແຜ່ ແລະ ຊຸກຍູ້ການຈັດຕັ້ງປະຕິບັດ ນະໂຍບາຍ, ກົດໝາຍ, ແຜນພັດທະນາ ແລະ ລະບຽບການ ກ່ຽວກັບການສົ່ງເສີມ ຈນກ ໃຫ້ພາກລັດ ແລະ ພາກທຸລະກິດຮັບຮູ້ຢ່າງກວ້າງຂວາງ ພາຍໃນແຂວງ, ນະຄອນຫຼວງ ຂອງຕົນ;

3. ຊີ້ນຳ ແລະ ຕິດຕາມການເຄື່ອນໄຫວຂອງຫ້ອງການອຸດສະຫະກຳ ແລະ ການຄ້າ ເມືອງ, ເທດສະບານ, ນະຄອນ ກ່ຽວກັບວຽກງານສົ່ງເສີມ ຈນກ;

4. ສະໜອງ ຂໍ້ມູນ ຂ່າວສານ ກ່ຽວກັບວຽກງານສົ່ງເສີມ ຈນກ ໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ, ຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດແຜນພັດທະນາ ຈນກ ໃນແຕ່ລະໄລຍະ ຢູ່ທ້ອງຖິ່ນຂອງຕົນ;

5. ຮັບຄຳສະເໜີຂອງພາກທຸລະກິດ ແລະ ພາກສ່ວນທີ່ກ່ຽວຂ້ອງ ກ່ຽວກັບວຽກງານສົ່ງເສີມ ຈນກ ພາຍໃນ ແຂວງ, ນະຄອນຫຼວງ ເພື່ອສັງລວມລາຍງານ ຂັ້ນເທິງພິຈາລະນາ;

6. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ທັງພາກລັດ ແລະ ພາກທຸລະກິດ ໃນການຈັດຕັ້ງປະຕິບັດນະໂຍບາຍ, ຍຸດທະສາດ ແລະ ແຜນພັດທະນາ ຈນກ ຕາມຄວາມຮັບຜິດຊອບຂອງຕົນ;

7. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ ກ່ຽວກັບວຽກງານສົ່ງເສີມ ຈນກ ຕາມການມອບໝາຍ;

8. ສະຫຼຸບ ແລະ ລາຍງານ ຜົນຂອງການເຄື່ອນໄຫວຈັດຕັ້ງປະຕິບັດວຽກງານສົ່ງເສີມ ຈນກ ໃຫ້ອົງການປົກຄອງຂັ້ນແຂວງ ແລະ ກະຊວງອຸດສາຫະກຳ ແລະ ການຄ້າ ຢ່າງເປັນປົກກະຕິ;

9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ກົດໝາຍ.

**ມາດຕາ 62 (ໃໝ່) ສິດ ແລະ ໜ້າທີ່ຂອງຫ້ອງການອຸດສາຫະກຳ ແລະ ການຄ້າ ຂັ້ນເມືອງ**

ໃນການຄຸ້ມຄອງວຽກງານສົ່ງເສີມ ຈນກ ຫ້ອງການອຸດສາຫະກຳ ແລະ ການຄ້າຂັ້ນເມືອງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຈັດຕັ້ງປະຕິບັດ ແຜນການ, ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ກ່ຽວກັບວຽກງານສົ່ງເສີມ ຈນກ ທີ່ຂັ້ນເທິງໄດ້ວາງອອກ;

2. ເຜີຍແຜ່ ນະໂຍບາຍ, ກົດໝາຍ ແລະ ລະບຽບການ ກ່ຽວກັບການສົ່ງເສີມ ຈນກ ພາຍໃນເມືອງ, ເທດສະບານ, ນະຄອນ ຂອງຕົນ ໃຫ້ຮັບຮູ້ຢ່າງກວ້າງຂວາງ ແລະ ທົ່ວເຖິງ;

3. ຊີ້ນຳ, ຊຸກຍູ້ ແລະ ຕິດຕາມການຈັດຕັ້ງປະຕິບັດວຽກງານສົ່ງເສີມ ຈນກ ພາຍໃນເມືອງ, ເທດສະບານ, ນະຄອນ ຂອງຕົນ;

4. ຮັບຄຳສະເໜີຂອງພາກທຸລະກິດ ແລະ ພາກສ່ວນທີ່ກ່ຽວຂ້ອງ ກ່ຽວກັບວຽກງານສົ່ງເສີມ ຈນກ ພາຍໃນ ເມືອງ, ເທດສະບານ, ນະຄອນ ຂອງຕົນ ເພື່ອສັງລວມລາຍງານຂັ້ນເທິງພິຈາລະນາ;

5. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ທັງພາກລັດ ແລະ ພາກທຸລະກິດ ໃນການຈັດຕັ້ງປະຕິບັດນະໂຍບາຍ, ຍຸດທະສາດ ແລະ ແຜນພັດທະນາ ຈບກ ຕາມຄວາມຮັບຜິດຊອບຂອງຕົນ;

6. ສະຫຼຸບ ແລະ ລາຍງານ ຜົນການຈັດຕັ້ງປະຕິບັດວຽກງານສົ່ງເສີມ ຈບກ ຢູ່ພາຍໃນ ເມືອງ, ເທດສະບານ, ນະຄອນ ຂອງຕົນ ໃຫ້ອົງການປົກຄອງຂັ້ນເມືອງ ແລະ ພະແນກອຸດສະຫະກຳ ແລະ ການຄ້າຂັ້ນແຂວງ ຢ່າງເປັນປົກກະຕິ;

7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 63 (ປັບປຸງ) ສິດ ແລະ ໜ້າທີ່ຂອງຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ**

ຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ມີ ສິດ ແລະ ໜ້າທີ່ ໃນການສົ່ງເສີມ, ຊຸກຍູ້, ຕິດຕາມ ກວດກາ, ໃຫ້ການຮ່ວມມື ແລະ ປະສານສົມທົບກັບອົງການຄຸ້ມຄອງວຽກງານສົ່ງເສີມ ຈບກ ແລະ ການຈັດຕັ້ງສົ່ງເສີມ ຈບກ ໃນການຈັດຕັ້ງປະຕິບັດກົດໝາຍສະບັບນີ້ ຕາມພາລະບົດບາດ ແລະ ຂອບເຂດຄວາມຮັບຜິດຊອບຂອງຕົນ.

## ໝວດທີ 2
## ການກວດກາວຽກງານສົ່ງເສີມ
## ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ

**ມາດຕາ 64 (ປັບປຸງ) ອົງການກວດກາວຽກງານສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ**

ອົງການກວດກາວຽກງານສົ່ງເສີມ ຈບກ ປະກອບດ້ວຍ:

1. ອົງການກວດກາພາຍໃນ ຊຶ່ງແມ່ນ ອົງການດຽວກັນກັບອົງການຄຸ້ມຄອງວຽກງານສົ່ງເສີມ ຈບກ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 59 ຂອງກົດໝາຍສະບັບນີ້.

2. ອົງການກວດກາພາຍນອກ ຊຶ່ງແມ່ນ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການກວດກາແຫ່ງລັດ, ອົງການກວດສອບແຫ່ງລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ ແລະ ສື່ມວນຊົນ.

**ມາດຕາ 65 ເນື້ອໃນການກວດກາ**

ການກວດກາວຽກງານສົ່ງເສີມ ຈບກ ມີ ດັ່ງນີ້:

1. ການປະຕິບັດນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານສົ່ງເສີມ ຈບກ;

2. ການຈັດຕັ້ງ ແລະ ການເຄື່ອນໄຫວຂອງອົງການຄຸ້ມຄອງ ແລະ ກວດກາວຽກງານສົ່ງເສີມ ຈບກ;

3. ການຄຸ້ມຄອງ, ຕິດຕາມ ກວດກາ ແລະ ນຳໃຊ້ກອງທຶນສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ;

4. ການນຳໃຊ້ສິດ, ການປະຕິບັດໜ້າທີ່ຂອງພະນັກງານ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງກັບວຽກງານສົ່ງເສີມ ຈບກ.

ມາດຕາ 66 ຮູບການກວດກາ

ການກວດກາວຽກງານສິ່ງເສີມ ຈນກ ມີ ສາມຮູບການ ດັ່ງນີ້:

1. ການກວດກາປົກກະຕິ ຊຶ່ງແມ່ນ ການກວດກາ ຕາມແຜນການ ຢ່າງເປັນປະຈໍາ ແລະ ມີການກໍານົດເວລາອັນແນ່ນອນ;

2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນ ການກວດການອກແຜນການ ເມື່ອເຫັນວ່າມີຄວາມຈໍາເປັນ ຊຶ່ງຕ້ອງແຈ້ງໃຫ້ ຜູ້ຖືກກວດກາຊາບລ່ວງໜ້າ;

3. ການກວດກາກະທັນຫັນ ຊຶ່ງແມ່ນ ການກວດກາເມື່ອເຫັນວ່າມີຄວາມຈໍາເປັນ ແຕ່ການລົງກວດການັ້ນ ດໍາເນີນຢ່າງຮີບດ່ວນ ໂດຍບໍ່ມີການແຈ້ງໃຫ້ເປົ້າໝາຍທີ່ຈະຖືກກວດກາຮູ້ກ່ອນລ່ວງໜ້າ.

ໃນການດໍາເນີນການກວດກາວຽກງານສິ່ງເສີມ ຈນກ ໃຫ້ປະຕິບັດຖືກຕ້ອງຕາມກົດໝາຍ ຢ່າງເຂັ້ມງວດ.

## ພາກທີ IX
## ງົບປະມານ, ເຄື່ອງໝາຍ ແລະ ຕາປະທັບ

ມາດຕາ 67 ງົບປະມານ

ລັດຖະບານ ຈັດສັນງົບປະມານເປັນການສະເພາະ ສໍາລັບວຽກງານສິ່ງເສີມ ຈນກ ຊຶ່ງໄດ້ບັນຈຸເຂົ້າໃນແຜນງົບປະມານແຫ່ງລັດ ໂດຍສອດຄ່ອງກັບກົດໝາຍວ່າດ້ວຍງົບປະມານແຫ່ງລັດ.

ມາດຕາ 68 ເຄື່ອງໝາຍ ແລະ ຕາປະທັບ

ສໍານັກງານສິ່ງເສີມ ຈນກ ມີ ເຄື່ອງໝາຍ ແລະ ຕາປະທັບ ເປັນຂອງຕົນ ເພື່ອນໍາໃຊ້ເຂົ້າໃນການເຄື່ອນໄຫວວຽກງານທາງລັດຖະການ.

## ພາກທີ X
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

ມາດຕາ 69 ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດວຽກງານສິ່ງເສີມ ຈນກ ຢ່າງມີປະສິດທິຜົນ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

ມາດຕາ 70 (ປັບປຸງ) ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດກົດໝາຍສະບັບນີ້ ເປັນຕົ້ນ ບັນດາຂໍ້ຫ້າມ ຈະຖືກກ່າວເຕືອນ, ສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ລົງໂທດທາງອາຍາ ຕາມກົດໝາຍ.

## ພາກທີ XI
## ບົດບັນຍັດສຸດທ້າຍ

**ມາດຕາ 71 ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 72 (ປັບປຸງ) ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 11 ຕຸລາ 2022 ພາຍຫຼັງປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການ ເປັນຕົ້ນໄປ.

ກົດໝາຍສະບັບນີ້ ປ່ຽນແທນກົດໝາຍວ່າດ້ວຍການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ສະບັບເລກທີ 11/ສພຊ, ລົງວັນທີ 21 ທັນວາ 2011.

**ປະທານສະພາແຫ່ງຊາດ**

ປອ ໄຊສົມພອນ ພົມວິຫານ